**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------------------

# <u>ບົດລາຍງານ</u>

## ການປະກອບສ່ວນພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກແຫ່ງຊາດ ຂອງກອງທຶນຫລຸດຜ່ອນ ຄວາມທຸກຍາກ (ທລຍ)

## 2003 -2009



ກະກຽມໂດຍ :

ທີມງານຕິດຕາມ ແລະ ປະເມີນຜົນ

ສິງຫາ 2009

---

*ນະຄອນຫລວງວຽງຈັນ, ຫ້ອງການ ທລຍ, ຕູ້ໄປສະນີ: 4625,ໂທ: (856-21)261479/80, ແຟກ: (856-21)261481*

*ອີເມລ: prflao@laotel.com, www.prflaos.org*

**ສາລະບານ**

ລາຍການຕະຕາລາງ ........ 3
ລາຍການແຜນວາດ ........ 3
ບົດສະຫລຸບຫຍໍ້ ........ 4
I. ການຈັດຕັ້ງປະຕິບັດວຽກງານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ........ 6
1.1 ຄວາມເປັນມາຂອງກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ........ 6
1.2. ຈຸດປະສົງຕົ້ນຕໍຂອງ ທລຍ ........ 6
1.3 7 ຫລັກການພື້ນຖານໃນການເຮັດວຽກຂອງ ທລຍ ........ 7
1.4 ທີ່ມາຂອງແຫລ່ງທຶນ ........ 7
1.5 ຜົນງານຕົວຈິງໃນ 5 ປີ ນັບແຕ່ຮອບວຽນທີ 1-5 (2003-2008). ........ 8
1.6. ທຶນປະກອບສ່ວນຂອງຊຸມຊົນ ........ 9
1.7. ການຈັດຕັ້ງປະຕິບັດໂຄງການ ຂອງຊຸມຊົນ - ຜູ້ຮັບເຫມົາ-ສັນຍາຈ້າງ ........ 9
1.8 ຜົນໄດ້ຮັບຂອງ ທລຍ ນັບແຕ່ຮອບວຽນທີ 1-5 (2003-2008) ........ 10
II. ຂະບວນການວາງແຜນແບບມີສ່ວນຮ່ວມຕາມຮູບແບບຂອງ ທລຍ ໄລຍະສືບຕໍ່ 3 ປີ ........ 13
2.1 ການຈັດລະດັບຄວາມທຸກຍາກ ຮອບວຽນທີ 6 ........ 14
2.2 ການວິໄຈຜົນໄດ້ຮັບຂອງກອງປະຊຸມຕັດສິນ ຮອບວຽນທີ 6 ........ 15
2.3. ການຈັດຕັ້ງປະຕິບັດວຽກງານໃນຮອບວຽນທີ 7 ........ 16
III. ດ້ານດີ, ດ້ານອ່ອນ (ຂໍ້ຄົງຄ້າງ) ແລະ ບົດຮຽນທີ່ຖອດຖອນໄດ້. ........ 17
3.1. ດ້ານດີ (ຜົນກະທົບດ້ານບວກຕໍ່ການພັດທະນາເສດຖະກິດ-ສັງຄົມ) ........ 18
3.2. ດ້ານອ່ອນ (ບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ປັບປຸງແກ້ໄຂ) ........ 18
3.3 ບາງບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດໂຄງການ. ........ 19

## ລາຍການຕະຕາລາງ

ຕາຕະລາງ 1: ຈຳນວນໂຄງການທີ່ຖືກຈັດຕັ້ງປະຕິບັດໃນ 5 ປີຜ່ານມາ (ຮອບວຽນ 1-5)................................ 8
ຕາຕະລາງ 2: ງົບປະມານທີ່ລົງທຶນໃສ່ການຈັດຕັ້ງປະຕິບັດໂຄງການໃນ 5 ປີຜ່ານມາ (ຮອບວຽນ 1-5) ........... 9
ແຜນວາດ 1: ອັດຕາສ່ວນລະຫວ່າງທຶນສົມທົບຂອງຊຸມຊົນ ກັບຂອງ ທລຍ ໃນການຈັດຕັ້ງປະຕິບັດໂຄງການ ...... 9
ແຜນວາດ 2: ອັດຕາສ່ວນການຈັດຕັ້ງປະຕິບັດໂຄງການ ໂດຍຊຸມຊົນ, ຜູ້ຮັບເໝົາ ແລະ ຊຸມຊົນ-ຜູ້ຮັບເໝົາ. ..... 10
ຕາຕະລາງ 3: ຜົນສຳເລັດຂອງ ທລຍ ນັບຕັ້ງແຕຮອບວຽນທີ 1-5......................................................... 12
ຕາຕະລາງ 4: ຈຳນວນໂຄງການ ແລະ ງົບປະມານທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນທີ 6 ........................................................................................................................................ 15
ຕາຕະລາງ 5: ລາຍລະອຽດຂອງການຈັດຕັ້ງປະຕິບັດຂອງ ທລຍ ນັບແຕ່ເລີ່ມຕົ້ນຈົນ ສິງຫາ 2009 ................ 16
ຕາຕະລາງທີ 6 : ຂອບເຂດຈັດຕັ້ງປະຕິບັດວຽກງານ ທລຍ ຮອບວຽນທີ 7 (ບໍ່ລວມແຂວງ ເຊກອງ).................. 17

## ລາຍການແຜນວາດ

ແຜນວາດ 1: ອັດຕາສ່ວນລະຫວ່າງທຶນສົມທົບຂອງຊຸມຊົນ ກັບຂອງ ທລຍ ໃນການຈັດຕັ້ງປະຕິບັດໂຄງການ ...... 9
ແຜນວາດ 2: ອັດຕາສ່ວນການຈັດຕັ້ງປະຕິບັດໂຄງການ ໂດຍຊຸມຊົນ-ຜູ້ຮັບເໝົາ & ຊຸມຊົນ-ຜູ້ຮັບເໝົາ. .......... 10

# ບົດສະຫລຸບຫຍໍ້

ການຈັດຕັ້ງປະຕິບັດວຽກງານທີ່ຜ່ານໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ແມ່ນອີງໃສ່ການຕັດສິນໃຈ ແລະ ມອບຄວາມຮັບ ຜິດຊອບໃຫ້ຊາວບ້ານ ເຊິ່ງເປັນການສ້າງໂອກາດໃຫ້ແກ່ຊາວບ້ານມີທາງເລືອກກ່ຽວກັບປະເພດຂອງໂຄງການ ແລະ ຂໍ້ສະເໜີຕ່າງໆ ບໍ່ພຽງແຕ່ເທົ່ານັ້ນ ທລຍ ກໍ່ອະນຸຍາດໃຫ້ຊາວບ້ານເລືອກໃນການ ຈັດຕັ້ງປະຕິບັດໂຄງການຍ່ອຍດ້ວຍຊຸມຊົນເອງ ຫລື ເຮັດສັນຍາກັບຜູ້ຮັບເໝົາ ທັງເປັນຜູ້ຄວບຄຸມທາງດ້ານການເງິນໃນການເບີກຈ່າຍໃຫ້ແກ່ຜູ່ຮັບເໝົາໂດຍກົງ ເຊິ່ງກິດຈະກຳ ດັ່ງກ່າວບໍ່ເຄີຍມີອີງການໃດໆໃນ ສປປ ລາວ ຈັດຕັ້ງປະຕິບັດມາກ່ອນ.

ໃນຮອບວຽນທີ 1 (2003-2004), ທລຍໄດ້ຈັດຕັ້ງປະຕິບັດກິດຈະກຳຢູ່ 3 ແຂວງ, 10 ເມືອງ, 121 ກຸ່ມບ້ານ, ກວາມເອົາ 913 ບ້ານ ປະກອບດ້ວຍບ້ານທຸກຍາກທັງໝົດຈຳນວນ 666 ບ້ານ ແລະ ມີປະຊາກອນທັງໝົດ 380,681 ຄົນ. ມີ 248 ໂຄງການຍ່ອຍໄດ້ຖືກຈັດຕັ້ງປະຕິບັດ ປະກອບດ້ວຍໂຄງການກໍ່ສ້າງພື້ນຖານໂຄງລ່າງ ຈຳນວນ 237 ໂຄງການ ແລະ ກ່ຽວກັບການຝຶກອົບຮົມສ້າງຄວາມເຂັ້ມແຂງຈຳນວນ 11 ໂຄງການ. ໄດ້ນຳໃຊ້ງົບ ປະມານທັງໝົດ 1,069,934 ດອນລາສະຫະລັດ ຫລື ປະມານ 11 ຕື້ກີບ[2] ແລະ ທຶນປະກອບສ່ວນຂອງຊຸມຊົນປະມານ 2.22 ຕື້ກີບ ຫລື ປະມານ 17 % ຂອງງົບປະມານທັງໝົດທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃນຮອບວຽນ 2 (2004-2005), ທລຍ ໄດ້ຈັດຕັ້ງປະຕິບັດກິດຈະກຳຢູ່ 3 ແຂວງ, 14 ເມືອງ, 188 ກຸ່ມບ້ານ, ກວາມເອົາ 1,431 ບ້ານ ໃນນັ້ນເປັນບ້ານທຸກຍາກ 1089 ບ້ານ ແລະ ມີປະຊາກອນທັງໝົດ 549,1312 ຄົນ. ມີ 431 ໂຄງ ການຍ່ອຍ ທີ່ໄດ້ຖືກຈັດຕັ້ງປະຕິບັດ, ໃນນັ້ນ 388 ໂຄງການແມ່ນກ່ຽວກັບການກໍ່ສ້າງພື້ນຖານໂຄງລ່າງ ແລະ 43 ໂຄງການແມ່ນກ່ຽວກັບວຽກງານການຝຶກອົບຮົມສ້າງຄວາມເຂັ້ມແຂງ. ໄດ້ນຳໃຊ້ງົບປະມານທັງໝົດ 3,101,000 ດອນລາສະຫະລັດ ຫລື ປະມານ 31.83 ຕື້ກີບ ແລະ ທຶນປະກອບສ່ວນ ຂອງຊຸມຊົນປະມານ 6.97 ຕື້ກີບ ຫລື ປະມານ 18% ຂອງງົບປະມານທັງໝົດ ທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃນຮອບວຽນທີ 3 (2005-2006), ທລຍ ໄດ້ຂະຫຍາຍກິດຈະກຳໄປສູ່ສອງແຂວງໃໝ່ຄື: (1)ແຂວງຊຽງຂວາງ ແລະ (2)ແຂວງສາລະວັນ. ສະນັ້ນ, ໃນຮອບວຽນທີ 3 ນີ້ ທລຍ ໄດ້ເຮັດວຽກຢູ່ 5 ແຂວງ ໃນ 20 ເມືອງ, 239 ກຸ່ມບ້ານ, ກວາມເອົາ 1913 ບ້ານ ໃນນັ້ນເປັນບ້ານທຸກຍາກ 1,464 ບ້ານ ແລະ ມີປະຊາກອນທັງໝົດ 718,707. ມີຈຳ ນວນ 533 ໂຄງການ ໄດ້ຖືກຈັດຕັ້ງປະຕິບັດ, ໃນນັ້ນເປັນໂຄງການກໍ່ສ້າງພື້ນຖານໂຄງລ່າງຈຳນວນ 446 ໂຄງການ ແລະ ເປັນ ໂຄງການ ກ່ຽວກັບການຝຶກອົບຮົມສ້າງຄວາມເຂັ້ມແຂງ 83 ໂຄງການ. ໄດ້ນຳໃຊ້ງົບປະມານທັງໝົດ 4,163,909 ລອນດາສະຫະລັດ ຫລື ປະມານ 43.9 ຕື້ກີບ ແລະ ທຶນປະກອບສ່ວນຂອງຊຸມຊົນປະມານ 17.3 ຕື້ ກີບ ຫລື ປະມານ 17.3% ຂອງງົບປະມານທັງໝົດທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃນຮອບວຽນທີ 4 (2006-2007), ທລຍ ໄດ້ເຮັດວຽກຢູ່ 5 ແຂວງ, 21 ເມືອງ, 252 ກຸ່ມບ້ານ, ກວາມເອົາ 1,880 ບ້ານ ປະກອບດ້ວຍບ້ານທຸກຍາກ 1,499 ບ້ານ ແລະ ປະຊາກອນທັງໝົດ 744,140 ຄົນ. ມີ 548 ໂຄງການ ທີ່ໄດ້ຖືກຈັດຕັ້ງປະຕິບັດ ໃນນັ້ນມີ 370 ໂຄງການແມ່ນກ່ຽວກັບການກໍ່ສ້າງພື້ນຖານໂຄງລ່າງ ແລະ 178 ໂຄງການ ແມ່ນກ່ຽວກັບການຝຶກອົບຮົມສ້າງຄວາມເຂັ້ມແຂງ. ໄດ້ນຳໃຊ້ງົບປະມານທັງໝົດ 4,580,000 ລອນດາສະ

---

[2]ສຳລັບຮອບວຽນ 1 ຫາ ຮອບວຽນ 3 ອັດຕາແລກປ່ຽນ ຢູ່ລະຫວ່າງ 1000010500/1 ດອນລາສະຫະລັດ

ຫະລັດ ຫລື ປະມານ 45 ຕື້ກີບ ແລະ ທຶນປະກອບສ່ວນຂອງຊຸມຊົນປະມານ 8.01 ຕື້ກີບ ຫລື ປະມານ 15.2% ຂອງງົບປະມານທັງໝົດ ທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃນຮອບວຽນທີ 5 (2007-2008) ເຊິ່ງແມ່ນຮອບວຽນສຸດທ້າຍຂອງການດຳເນີນງານ ໃນ 5 ປີທຳອິດແຕ່ 2003 ຫາ 2008, ໃນຮອບວຽນດັ່ງກ່າວ ທລຍ ໄດ້ຈັດຕັ້ງປະຕິບັດໜ້າວຽກໃນ 5 ແຂວງເປົ້າໝາຍ ຢູ່ 21 ເມືອງ, 161 ກຸ່ມບ້ານ, ກວາມເອົາ 1268 ບ້ານ ປະກອບດ້ວຍບ້ານທຸກຍາກ 985 ບ້ານ ແລະ ປະຊາກອນທັງໝົດ 443.475 ຄົນ. ມີ 307 ໂຄງການ ທີ່ໄດ້ຖືກຈັດຕັ້ງປະຕິບັດ ໃນນັ້ນເປັນໂຄງການກໍ່ສ້າງພື້ນຖານໂຄງລ່າງຈຳນວນ 258 ໂຄງການ ແລະ 49 ໂຄງການແມ່ນກ່ຽວກັບວຽກງານນານຝຶກອົບຮົມສ້າງຄວາມເຂັ້ມແຂງ. ໄດ້ນຳໃຊ້ງົບປະມານທີ່ ທລຍ ສະໜັບສະ ໜູນຈຳນວນ 3,700,000 ລອນດາສະຫະລັດ ຫລື ປະມານ 35 ຕື້ກີບ ແລະ ທຶນປະ ກອບສ່ວນຂອງຊຸມຊົນປະມານ 8.59 ຕື້ກີບ ຫລືປະມານ 20% ຂອງງົບປະມານທັງໝົດອ ທີ່ນຳໃຊ້ເຂົ້າໃນ ການຈັດຕັ້ງປະຕິບັດໂຄງການຍ່ອຍ..

ຈາກໝາກຜົນອັນພົ້ນເດັ່ນຂອງການຈັດຕັ້ງປະຕິບັດວຽກງານ ທລຍ ໃນໄລຍະ 5 ປີທຳອິດ (2003-2008). ສະນັ້ນ, ທາງລັດຖະບານແຫ່ງ ສປປ ລາວ ແລະ ຜູ້ໃຫ້ທຶນໄດ້ຕົກລົງເຫັນດີ ສະໜອງທຶນສືບຕໍ່ໄລຍະການຈັດຕັ້ງປະຕິບັດໂຄງການເປັນເວລາ 3 ປີ ເປັນງົບປະມານທັງໝົດຈຳນວນ 20 ລ້ານລອນດາສະຫະລັດ ເຊິ່ງເປັນເງິນຊ່ວຍເຫລືອລ້າຈາກທະນາຄານໂລກ 15 ລ້ານລອນດາສະຫະລັດ ແລະ ຈາກອົງການຮ່ວມມືພັດທະນາປະເທດສະວິດເຊີແລນ ຈຳນວນ 5 ລ້ານລອນດາສະຫະລັດ.

ໃນຮອບວຽນທີ 6 (2008-2009) ນີ້ເປັນຮອບວຽນທຳອິດຂອງການສືບຕໍ່ໂຄງການ (2008-2011), ທລຍ ໄດ້ເຄື່ອນໄຫວວຽກງານຢູ່ 6 ແຂວງ, 19 ເມືອງ ຊຶ່ງນອນຢູ່ໃນ 47 ເມືອງທຸກຍາກທີ່ສຸດ ເປັນບູລິມະສິດຕົ້ນຕໍຂອງລັດຖະບານໃນການແກ້ໄຂຄວາມທຸກຍາກ, ໃນ 19 ເມືອງນັ້ນ ໄດ້ແບ່ງອອກເປັນ 195 ກຸ່ມບ້ານພັດທະນາ ແລະ 1,458 ບ້ານ ເປັນບ້ານທຸກຍາກຈຳນວນ 994 ບ້ານ ແລະ ປະກອບດ້ວຍພົນລະເມືອງທັງໝົດ 619,423 ຄົນ ໃນນັ້ນເປັນຍິງ 312,153 ຄົນ. ມີ 355 ໂຄງການທີ່ໄດ້ຖືກຄັດເລືອກສຳລັບການຈັດຕັ້ງປະຕິບັດວຽກງານໃນຮອບວຽນດັ່ງກ່າວ ໃນນັ້ນ 223 ໂຄງການແມ່ນກ່ຽວກັບການກໍ່ສ້າງພື້ນຖານໂຄງລ່າງ ແລະ 132 ໂຄງການແມ່ນກ່ຽວກັບວຽກງານຝຶກອົບຮົມສ້າງຄວາມເຂັ້ມແຂງ. ໄດ້ນຳໃຊ້ງົບປະມານທີ່ ທລຍ ສະໜັບສະໜູນຈຳນວນ 4,423,000 ດອນລາສະຫະລັດ ຫລື ປະມານ 39.13 ຕື້ກີບ ແລະ ທຶນປະກອບສ່ວນຂອງຊຸມຊົນປະມານ 7.28 ຕື້ກີບ ຫລື ປະມານ 15% ຂອງງົບປະມານທັງໝົດ ທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃນຮອບວຽນທີ 7 ນີ້ (2009-2010) ວຽກງານ ທລຍ ໄດ້ກວາມເອົາ 7 ແຂວງ, 21 ເມືອງ, 214 ກຸ່ມບ້ານພັດທະນາ ແລະ 1,567 ບ້ານ ຊຶ່ງກວາມເອົາບ້ານທຸກຍາກຈຳນວນ 1,197 ບ້ານ ແລະ ປະກອບດ້ວຍພົນລະເມືອງທັງໝົດ 660,540 ຄົນ ໃນນັ້ນ ເປັນ ຍິງ 326,921 ຄົນ. ໃນຮອບວຽນທີ 7 ນີ້ ມີຈຳນວນ 463 ໂຄງການທີ່ໄດ້ຖືກຄັດເລືອກສຳລັບການຈັດຕັ້ງປະຕິບັດຢູ່ 21 ຕົວເມືອງ ໃນ 7 ແຂວງເປົ້າໝາຍ ຊຶ່ງເປັນໂຄງການທີ່ກ່ຽວຂ້ອງກັບວຽກງານການກໍ່ສ້າງພື້ນຖານໂຄງລ່າງຈຳນວນ 277 ໂຄງການ ແລະ ໂຄງການຝຶກອົບຮົມສ້າງຄວາມເຂັ້ມແຂງ 186 ໂຄງການ ແລະ ຄາດວ່າຈະນຳໃຊ້ງົບປະມານຂອງ ທລຍ ທັງໝົດຈຳນວນ 5,244,000 ດອນລາສະຫະລັດ ຫລື ປະມານ 51.69 ຕື້ກີບ (88.92%) ແລະ ທຶນປະກອບສ່ວນຂອງຊຸມຊົນປະມານ 6.44 ຕື້ກີບ ຫລື ປະມານ 11.8% ຂອງງົບປະມານທັງໝົດ ທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

# I. ການຈັດຕັ້ງປະຕິບັດວຽກງານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ

## 1.1 ຄວາມເປັນມາຂອງກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ແມ່ນການຈັດຕັ້ງໃໝ່ພາຍໃຕ້ຄວາມພະຍາຍາມຂອງລັດຖະບານໃນການຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຕາມມະຕິຂອງກອງປະຊຸມໃຫຍ່ຄັ້ງທີ 7 ຂອງສູນກາງພັກ, ໂດຍການສະໜັບສະໜູນຂອງທະນາຄານໂລກ (ເງິນກູ້ຢືມເລກທີ 3675 LA) ເພື່ອປະກອບສ່ວນເຂົ້າໃນວຽກງານພັດທະນາເສດຖະກິດ-ສັງຄົມ ໃນການລຶບລ້າງຄວາມທຸກຍາກໃຫ້ປະຊາຊົນລາວ ໂດຍສະເພາະປະຊາຊົນບັນດາເຜົ່າ ທີ່ອາໄສຢູ່ເຂດຫ່າງໄກສອກຫລີກ. ທລຍ ໄດ້ຖືກສ້າງຕັ້ງຂຶ້ນ ໂດຍ ດຳລັດເລກທີ 073/ນຍ ລົງວັນທີ 31 ພຶດສະພາ 2002. ດຳລັດດັ່ງກ່າວໄດ້ມີການດັດປັບທາງດ້ານໜ້າວຽກ ແລະ ພາລະບົດບາດບາງອັນດັ່ງມີເນື້ອໃນທີ່ລະບຸໄວ້ໃນດຳລັດເລກທີ 222/ນຍ ລົງວັນທີ 29/09/2006. ທລຍ ໄດ້ບັນລຸເງື່ອນໄຂສັນຍາເງິນກູ້ໃນເດືອນກຸມພາ 2003 ໂດຍມີໄລຍະຈັດຕັ້ງປະຕິບັດ 5 ປີ (2003-2008).

## 1.2. ຈຸດປະສົງຕົ້ນຕໍຂອງ ທລຍ

ທລຍ ຈັດຕັ້ງປະຕິບັດກິດຈະກຳຂອງຕົນໂດຍປິ່ນອ້ອມ 3 ຈຸດປະສົງໃຫຍ່ຄື:

(i) ຊ່ວຍເຫລືອຊາວບ້ານໃນການພັດທະນາໂຄງລ່າງຂະໜາດນ້ອຍ ແລະ ໃຫ້ເຂົາເຈົ້າໄດ້ຮັບການບໍລິການດ້ານຕ່າງໆຕາມຄວາມຈຳເປັນ ແລະ ເໝາະສົມ.

(ii) ສ້າງຂີດຄວາມສາມາດ ເພື່ອມອບສິດໃຫ້ຊາວບ້ານທຸກຍາກເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນຢູ່ໃນໝູ່ບ້ານດ້ວຍຕົນເອງຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສເປັນຫລັກ

(iii) ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນທ້ອງຖິ່ນ, ສະໜັບສະໜູນຂະບວນການຕັດສິນໃຈ ແລະ ການແກ້ໄຂຂໍ້ຂັດແຍ່ງແບບມີສ່ວນຮ່ວມຕັ້ງແຕ່ຂັ້ນບ້ານ, ກຸ່ມບ້ານ ແລະ ເມືອງ ໂດຍໃຫ້ມີສ່ວນກ່ຽວຂ້ອງຢ່າງກ້ວາງຂວາງຂອງຊາວບ້ານ, ໂດຍສະເພາະບ້ານທຸກຍາກທີ່ປະກອບດ້ວຍຊົນເຜົ່າຕ່າງໆ ແລະ ເພດຍິງ.

ໂດຍທົ່ວໄປແລ້ວ, ໂຄງການໃນຮູບແບບດັ່ງກ່າວແມ່ນໂຄງການໃໝ່ທີ່ບໍ່ເຄີຍມີໂຄງການໃດຈັດຕັ້ງມາກ່ອນຄືການມຸ້ງເນັ້ນເອົາຊຸມຊົນເປັນຫລັກ, ກະຕຸ້ນໃຫ້ຊຸມຊົນໄດ້ມີໂອກາດໃນການຕັດສິນໃຈ ແລະ ສະເໜີຂໍໂຄງການທີ່ເຂົາເຈົ້າເຫັນວ່າມີຄວາມຈຳເປັນຕໍ່ການດຳລົງຊີວິດຂອງເຂົາເຈົ້າຢ່າງແທ້ຈິງໂດຍ ໄດ້ຮັບການສະໜັບສະໜູນຈາກທາງອຳນາດການປົກຄອງອ້ອມຂ້າງທີ່ເຂັ້ມແຂງ ສິ່ງດັ່ງກ່າວສົ່ງຜົນໃຫ້ບັນດາໂຄງການທີ່ສຳເລັດໄປ ແລ້ວມີຄວາມຍືນຍົງ, ສາມາດຕອບສະໜອງຕໍ່ຄວາມຕ້ອງການອັນເປັນພື້ນຖານໃຫ້ແກ່ການພັດທະນາຊຸມຊົນ ຢ່າງແທ້ຈິງ.

### 1.3 7 ຫລັກການພື້ນຖານໃນການເຮັດວຽກຂອງ ທລຍ

ໃນການຈັດຕັ້ງປະຕິບັດທີ່ກ່າວມາຂ້າງເທີງນັ້ນ, ທລຍ ຍັງຈັດຕັ້ງປະຕິບັດຕາມ 7 ຫລັກການພື້ນຖານຂອງ ທລຍ ຄື:

1. **ເລີ່ມແຕ່ງ່າຍໄປຫາຍາກ:** ໃຫ້ຊາວບ້ານເຮັດເອງໄດ້ໂດຍອີງໃສ່ຄວາມສາມາດຂອງຊາວບ້ານ. ຮູບແບບ ແລະ ເຕັກນິກການກໍ່ສ້າງບໍ່ໃຫ້ສັບສົນ. ອັນໃດງ່າຍເຮັດອັນນັ້ນກ່ອນ; ສ່ວນອັນໃດຍາກເອົາໄວ້ເຮັດນຳຫລັງ.
2. **ໃຫ້ຊາວບ້ານເປັນຜູ້ເລືອກ ແລະ ຕັດສິນເອົາເອງ:** ຊາວບ້ານຕັດສິນໃຈເລືອກເອົາເອງບົນພື້ນຖານຄວາມເປັນເອກະພາບ ແລະ ຄວາມຕ້ອງການທີ່ເປັນບູລິມະສິດແຕ່ບາງໂຄງການກໍ່ບໍ່ສາມາດອະນຸຍາດໃຫ້ໄດ້.
3. **ໃຫ້ຊາວບ້ານມີສ່ວນຮ່ວມທຸກຂັ້ນຕອນ:** ໃຫ້ຊາວບ້ານມີສ່ວນຮ່ວມດ້ວຍການພ້ອມກັນຄິດ, ພ້ອມກັນປຶກສາຫາລື, ກຳນົດຄວາມຕ້ອງການ, ຈັດຕັ້ງປະຕິບັດ ແລະ ປະກອບສ່ວນໃນທຸກວຽກງານ.
4. **ມອບຄວາມເປັນເຈົ້າຂອງ ແລະ ຄວາມຮັບຜິດຊອບໃຫ້ຊາວບ້ານ:** ໃຫ້ຊາວບ້ານເປັນເຈົ້າຂອງເງິນ ແລະ ຮັບຜິດຊອບໃນການນຳໃຊ້ເງິນເຂົ້າໃນການວາງແຜນ, ຈັດຕັ້ງປະຕິບັດ, ປົກປັກຮັກສາ ແລະ ຄຸ້ມຄອງໂຄງການດ້ວຍຕົນເອງ.
5. **ຮັບປະກັນຄວາມໂປ່ງໃສ ແລະ ໃຫ້ສາມາດກວດສອບໄດ້:** ຊາວບ້ານເປັນຜູ້ສະຫລຸບລາຍງານ ແລະ ເຜີຍແຜ່ລາຍຮັບລາຍຈ່າຍຂອງໂຄງການຢູ່ທຸກກອງປະຊຸມ. ມີກະດານຂ່າວຂອງເຂດເພື່ອແຈ້ງທຸກການເຄື່ອນໄຫວໃຫ້ໝົດທຸກຄົນຮັບຮູ້ ແລະ ຕິດຕາມໄດ້.
6. **ໃຫ້ເປັນການລົງທຶນທີ່ກຸ້ມຄ່າ ແລະ ຍືນຍົງ:** ຈັດແບ່ງທຶນໃຫ້ສອດຄ່ອງກັບສະພາບຄວາມທຸກຍາກ ຕົວຈິງຂອງບ້ານ, ເລືອກເອົາໂຄງການທີ່ເກີດຜົນປະໂຫຍດສູງສຸດ, ເຮັດໃຫ້ເປັນການລົງທຶນທີ່ກຸ້ມຄ່າ ແລະ ໃຫ້ໂຄງການ ມີຄວາມຍືນຍົງ.
7. **ໃຫ້ມີຄວາມເຫັນອົກເຫັນໃຈຊຶ່ງກັນແລະກັນ:** ເຂດໃດ, ບ້ານໃດທຸກຍາກຫລາຍກໍ່ຊ່ວຍເຫລືອເຂດນັ້ນ, ບ້ານນັ້ນກ່ອນ, ຜ່ອນສັ້ນຜ່ອນຍາວ ແລະ ສະແດງອອກເຖິງຄວາມເອື້ອເຟື້ອເຜື່ອແຜ່ ແລະ ເຫັນອົກເຫັນໃຈຕໍ່ຜູ້ທຸກ ຍາກຂາດເຂີນ.

### 1.4 ທີ່ມາຂອງແຫລ່ງທຶນ

ໄລຍະທຳອິດຂອງໂຄງການ ກອງທຶນຫລຸດພ່ອນຄວາມທຸກຍາກ 5 ປີ (2003 2008) ແມ່ນທຶນກູ້ຢືມຈາກທະນາຄານໂລກ ມູນຄ່າ 19,345,000 ໂດລາສະຫະລັດ.

ຜ່ານການເຄື່ອນໄຫວໃນໄລຍະ 5 ປີຜ່ານມາຮອດທ້າຍປີ 2008 ຈາກການປະເມີນຜົນຂອງຜູ້ໃຫ້ທຶນໄດ້ຢັ້ງຢືນວ່າຜ່ານມາກອງທຶນ ທລຍ ໄດ້ເຄື່ອນໄຫວຢ່າງມີປະສິດທິຜົນສູງ, ມີຄວາມໂປ່ງໃສ ສາມາດກວດສອບໄດ້ພ້ອມນັ້ນກໍ່ຍັງປະຕິບັດທຸກຂັ້ນຕອນ ແລະ ລະບຽບການຂອງຜູ້ໃຫ້ທຶນຢ່າງເຄັ່ງຄັດ ກໍ່ຄືແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ທີ່ໄດ້ກຳນົດເອົາບັນຫາການແກ້ໄຂຄວາມທຸກຍາກເປັນບູລິມະສິດອັນດັບໜຶ່ງທີ່ຕິດພັນກັບວຽກພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຊຶ່ງ ທລຍ ໄດ້ສຳເລັດການເຄື່ອນໄຫວ ໃນ 252 ກຸ່ມບ້ານ, 21 ເມືອງ ພາຍໃນ 5 ແຂວງ, ຊຶ່ງເຮັດ ໃຫ້ 7 ເມືອງ ທຸກຍາກ ສາມາດຫຼຸດພົ້ນອອກ ຈາກ ຄວາມທຸກຍາກໄດ້ ໂດຍ ພົ້ນ

ຖານ *( ເມືອງແອດ, ເມືອງສົບເບົາ, ເມືອງ ຄໍາ, ເມືອງມູນລະປາໂມກ, ເມືອງ ປະທຸມພອນ, ເມືອງໂຂງ ແລະ ເມືອງ ຕຸ້ມລານ)*

ຈາກຜົນງານດັ່ງກ່າວ ທະນາຄານໂລກ (WB) ຮ່ວມກັບອົງການຮ່ວມມືເພື່ອການພັດທະນາ ຂອງປະເທດສະວິດເຊີແລນ (SDC) ໄດ້ສືບຕໍ່ໃຫ້ການສະໜັບສະໜູນທຶນຊ່ວຍເຫຼືອລ້າຈໍານວນ 20 ລ້ານໂດລາສະຫະລັດ (ທະນາຄານ ໂລກ 15 ລ້ານ ໂດລາສະຫະລັດ ແລະ SDC 5 ລ້ານໂດລາສະຫະລັດ) ເຂົ້າໃນໄລຍະກະກຽມການສ້າງໂຄງ ການໃນໄລຍະສືບຕໍ່ ເປັນເວລາ 3 ປີ ນັບແຕ່ປີ 2008-2011 ໂດຍສືບ ຕໍ່ດໍາເນີນຕາມຈຸດປະສົງທີ່ໄດ້ກ່າວມາຂ້າງເທິງນັ້ນ.

### 1.5 ຜົນງານຕົວຈິງໃນ 5 ປີ ນັບແຕ່ຮອບວຽນທີ 1-5 (2003-2008).

ນັບແຕ່ເລີ່ມຕົ້ນໂຄງການໃນປີ 2003 ມາເຖິງ 2008, ທລຍ ໄດ້ດໍາເນີນການຈັດຕັ້ງປະຕິບັດກິດຈະກໍາ ໂດຍກວມເອົາຈໍານວນພົນລະເມືອງທັງຫມົດ 744,140 ຄົນ, ຈັດຕັ້ງປະຕິບັດຢູ່ໃນ 1,913 ບ້ານ, 161 ກຸ່ມບ້ານ, ພາຍໃນ 21 ເມືອງ ຂອງ 5 ແຂວງເປົ້າຫມາຍ (ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ຈໍາປາສັກ). ຜ່ານການຈັດຕັ້ງປະຕິບັດຕົວຈິງນັບແຕ່ປີ 2003 ເປັນຕົ້ນມາ, ທລຍ ສາມາດຈັດຕັ້ງປະຕິບັດໄດ້ທັງຫມົດຈໍານວນ 2,067 ໂຄງການ ໂດຍນໍາໃຊ້ງົບປະມານເຂົ້າໃນການຈັດຕັ້ງປະຕິບັດ 167 ຕື້ກີບ. ສາມາດສ້າງຜົນປະໂຫຍດໃຫ້ແກ່ຈໍານວນບ້ານທຸກຍາກທັງຫມົດຈໍານວນ 1,100 ບ້ານພາຍໃນ 21 ເມືອງ ຂອງ 5 ແຂວງເປົ້າໝາຍ.

ໃນຈໍານວນ 2,067 ໂຄງການທີ່ໄດ້ຮັບການຈັດຕັ້ງປະຕິບັດທັງຫມົດນັ້ນ ໄດ້ນໍາໃຊ້ງົບປະມານຈໍານວນຫລາຍກວ່າ 48 ຕື້ກີບ ກວມເອົາຂະແໜງດ້ານການສຶກສາ 581 ໂຄງການ ຫລື ປະມານ 28% ຂອງຈໍານວນໂຄງການທັງໝົດ. ຖັດມາແມ່ນຂະແໜງສາທາລະນະສຸກ ຊຶ່ງກວມເອົາຈໍານວນໂຄງການທັງໝົດ 557 ໂຄງການ ຫລື ກວມປະມານ 27% ຂອງຈໍານວນໂຄງການທັງໝົດ ໂດຍນໍາໃຊ້ງົບປະມານຈໍານວນຫລາຍກ່ວາ 35 ຕື້ກີບ, ເປັນໂຄງການດ້ານຄົມມະນາຄົມ 446 ໂຄງການ, ໂຄງການທີ່ນອນໃນຂະແໜງການດ້ານກິດຈະກໍາສ້າງລາຍ ຮັບກວມ 368 ໂຄງການ ແລະ ສຸດທ້າຍແມ່ນໂຄງການດ້ານກະສິກໍາກວມເອົາ 115 ໂຄງການ ດັ່ງລາຍລະອຽດ ຢູ່ໃນຕາຕະລາງລຸ່ມນີ້:

<u>ຕາຕະລາງ</u> **1: ຈໍານວນໂຄງການທີ່ຖືກຈັດຕັ້ງປະຕິບັດໃນ 5 ປີຜ່ານມາ (ຮອບວຽນ 1-5)**

| | ຮອບວຽນ I | ຮອບວຽນ II | ຮອບວຽນ III | ຮອບວຽນ IV | ຮອບວຽນ V | ລວມ | ອັດຕາສ່ວນ |
|---|---|---|---|---|---|---|---|
| ຂະແໜງການ | ຈໍານວນໂຄງການ | ຈໍານວນໂຄງການ | ຈໍານວນໂຄງການ | ຈໍານວນໂຄງການ | ຈໍານວນໂຄງການ | ຈໍານວນໂຄງການ | |
| ສຶກສາ | 72 | 141 | 146 | 134 | 88 | 581 | 28% |
| ໂຍທາທິການ ແລະ ຂົນສົ່ງ | 39 | 92 | 131 | 99 | 85 | 446 | 22% |
| ສາທາ | 107 | 129 | 143 | 102 | 76 | 557 | 27% |
| ກະສິກໍາ | 19 | 26 | 26 | 35 | 9 | 115 | 6% |
| ສ້າງລາຍຮັບ | 11 | 43 | 87 | 178 | 49 | 368 | 18% |
| ລວມ | 248 | 431 | 533 | 548 | 307 | 2,067 | 100% |

ຕາຕະລາງ 2: ງົບປະມານທີ່ລົງທຶນໃສ່ການຈັດຕັ້ງປະຕິບັດໂຄງການໃນ 5 ປີຜ່ານມາ (ຮອບວຽນ 1-5)

| | ຮອບວຽນ I | ຮອບວຽນ II | ຮອບວຽນ III | ຮອບວຽນ IV | ຮອບວຽນ V | ລວມ | ອັດຕາສ່ວນ |
|---|---|---|---|---|---|---|---|
| ຂະແໜງການ | ທຶນ ທລຍ | ທຶນ ທລຍ | ທຶນ ທລຍ | ທຶນ ທລຍ | ທຶນ ທລຍ | ທຶນ ທລຍ | |
| ສຶກສາ | 2,923,389,448 | 9,467,951,674 | 11,230,338,876 | 13,537,819,220 | 11,245,595,325 | 48,405,094,544 | 29% |
| ໂຍທາທິການ ແລະ ຂົນສົ່ງ | 2,445,253,465 | 13,070,091,993 | 18,707,183,940 | 16,327,346,035 | 14,311,658,201 | 64,861,533,635 | 39% |
| ສາທາ | 4,879,149,290 | 5,957,927,559 | 9,058,391,661 | 8,739,413,196 | 6,494,694,236 | 35,129,575,942 | 21% |
| ກະສິກຳ | 791,674,165 | 1,659,395,685 | 1,993,290,439 | 1,451,142,067 | 725,459,061 | 6,620,961,417 | 4% |
| ສ້າງລາຍຮັບ | 84,828,785 | 1,676,531,851 | 2,732,990,355 | 4,804,352,979 | 2,497,378,770 | 11,796,082,740 | 7% |
| ລວມ | 11,124,295,153 | 31,831,898,762 | 43,722,195,271 | 44,860,073,497 | 35,274,785,594 | 166,813,248,278 | 100% |

## 1.6. ທຶນປະກອບສ່ວນຂອງຊຸມຊົນ

ເພື່ອເຮັດໃຫ້ໂຄງການຂອງ ທລຍ ມີຄວາມຍືນຍົງ ແລະ ສ້າງຄວາມເປັນເຈົ້າການໃຫ້ແກ່ຊຸມຊົນໃຫ້ນັບມື້ນັບຫລາຍຂຶ້ນ ທລຍ ໄດ້ມີການປຸກລະດົມໃຫ້ຊຸມຊົນປະກອບສ່ວນໃນກິດຈະກຳຕ່າງໆ ຕາມຄວາມສາມາດຂອງເຂົາເຈົ້າເຊັ່ນ: ສົມທົບດ້ານແຮງງານ ແລະ ວັດສະດຸທີ່ມີຢູ່ໃນແຕ່ລະທ້ອງຖິ່ນ. ນັບແຕ່ເລີ່ມຈັດຕັ້ງປະຕິບັດໂຄງການເປັນຕົ້ນມາ, ຈະເຫັນໄດ້ວ່າອັດຕາສ່ວນຂອງການປະກອບສ່ວນຂອງຊຸມຊົນແມ່ນມີຫລາຍຂຶ້ນຄື: ເລີ່ມຈາກ 17%, 18%, 17%, 15% ແລະ 20% ຂອງງົບປະມານ ທີ່ ທລຍ ຊ່ວຍເຫລືອແຕ່ຮອບວຽນທີ 1 ເຖິງ 05 ເປັນລຳດັບ. ຕະຫລອດ 05 ປີ ທຶນ ສົມທົບຂອງຊຸມຊົນຄິດເປັນມູນຄ່າທັງຫມົດປະມານ 42 ຕື້ກີບ.

**ແຜນວາດ 1: ອັດຕາສ່ວນລະຫວ່າງທຶນສົມທົບຂອງຊຸມຊົນ ກັບຂອງ ທລຍ ໃນການຈັດຕັ້ງປະຕິບັດໂຄງການ**




## 1.7. ການຈັດຕັ້ງປະຕິບັດໂຄງການ ຂອງຊຸມຊົນ - ຜູ້ຮັບເຫມົາ-ສັນຍາຈ້າງ

ນຶ່ງໃນເປົ້າຫມາຍຂອງ ທລຍ ແມ່ນການສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃຫ້ແກ່ຊຸມຊົນ. ດັ່ງນັ້ນ, ທລຍ ຈຶ່ງໄດ້ຂົນຂວາຍ ແລະ ຊຸກຍູ້ໃຫ້ຊຸມຊົນມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການຕ່າງໆຂອງຊຸມຊົນດ້ວຍຕົວເອງ. ໃນ 5 ປີຜ່ານມາ ແລະ ໃນຈຳນວນໂຄງການທັງຫມົດ 2,067 ໂຄງການນັ້ນເຫັນວ່າຊຸມຊົນຈັດຕັ້ງປະຕິບັດເອງ 1,394 ໂຄງການ ຫລື ເທົ່າກັບ 67% . ຜູ້ຮັບເໝົາເອກກະຊົນດຳເນີນການກໍ່ສ້າງ 551 ໂຄງການ ຫລື ເທົ່າກັບ 27% ຊຶ່ງສ່ວນ ໃຫຍ່ລ້ວນແລ້ວແຕ່ ເປັນໂຄງ ການທີ່ຕ້ອງໄດ້ນຳໃຊ້ເຕັກນິກ ແລະ ກົນຈັກ ຊຶ່ງຊຸມຊົນບໍ່ສາມາດ

ຈັດຕັ້ງປະຕິບັດເອງໄດ້. ນອກຈາກນັ້ນ ກໍ່ເປັນໂຄງ ການທີ່ໄດ້ຈັດຕັ້ງປະຕິບັດຮ່ວມກັນລະຫວ່າງຜູ້ຮັບເຫມົາ ແລະ ຊຸມຊົນ ຊຶ່ງກວາມ 6% ຂອງໂຄງການທັງຫມົດ.

**ແຜນວາດ 2: ອັດຕາສ່ວນການຈັດຕັ້ງປະຕິບັດໂຄງການ ໂດຍຊຸມຊົນ, ຜູ້ຮັບເໝົາ ແລະ ຊຸມຊົນ-ຜູ້ຮັບເໝົາ**




ຈາກຂໍ້ມູນຂ້າງເທິງເຮົາສາມາດສະຫລຸບໄດ້ວ່າ ການຈັດຕັ້ງປະຕິບັດວຽກງານພາຍໃຕ້ວຽກງານຂອງ ທລຍ ຕະຫລອດໄລຍະເວລາ 5 ປີ ແມ່ນສາມາດບັນລຸເປົ້າໝາຍຂອງການສ້າງຄວາມເຂັ້ມແຂງ ໃຫ້ແກ່ຊຸມຊົນ ເຊິ່ງ 67% ຂອງຈຳນວນໂຄງການທັງໝົດໃນ 5 ຮອບວຽນແມ່ນໄດ້ຖືກຈັດຕັ້ງປະຕິບັດໂດຍ ຊຸມຊົນໃນເຂດເປົ້າໝາຍ ຕໍ່ບັນຫາດັ່ງກ່າວມັນສາມາດບັນລຸຈຸດປະສົງທີສອງຄື: ການສ້າງຂີດຄວາມສາ ມາດ ເພື່ອມອບສິດໃຫ້ຊາວບ້ານທຸກຍາກເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທືນຢູ່ໃນໝູ່ບ້ານ ດ້ວຍຕົນເອງຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສເປັນຫລັກ.

ພ້ອມດຽວກັນນັ້ນ ທລຍ ຍັງສາມາດບັນລຸເປົ້າໝາຍທີ 3 ຄື: ການສ້າງຄວາມ ເຂັ້ມແຂງໃຫ້ແກ່ສະຖາບັນທ້ອງຖິ່ນ, ສະໜັບສະໜູນຂະບວນການຕັດສິນໃຈ ແລະ ການແກ້ໄຂຂໍ້ຂັດແຍ່ງແບບມີສ່ວນຮ່ວມຕັ້ງແຕ່ຂັ້ນບ້ານ, ກຸ່ມບ້ານ ແລະ ເມືອງໂດຍໃຫ້ມີສ່ວນກ່ຽວຂ້ອງຢ່າງ ກ້ວາງຂວາງຂອງຊາວບ້ານ, ໂດຍສະເພາະບ້ານທຸກຍາກທີ່ປະກອບດ້ວຍຊົນເຜົ່າຕ່າງໆ ແລະ ເພດຍິງ. ເຊິ່ງທຸກການຈັດຕັ້ງປະຕິບັດວຽກງານ ທລຍ ແມ່ນບົນພື້ນຖານການມີສ່ວນຮ່ວມຂອງຊາວບ້ານທັງເພດຍິງ ແລະ ຊາຍ ລວມທັງຊົນເຜົ່າສ່ວນນ້ອຍໃນເຂດຊົນນະບົດ ພ້ອມດຽວກັນນັ້ນກໍ່ໄດ້ມີການປະສານສົມທົບກັບສະຖາບັນທ້ອງຖິ່ນເພື່ອຮັບປະກັນຄວາມໂປ່ງໃສ ແລະ ປະສິດຕິພາບຂອງໜ້າວຽກ.

## 1.8 ຜົນໄດ້ຮັບຂອງ ທລຍ ນັບແຕ່ຮອບວຽນທີ 1-5 (2003-2008)

ນັບແຕ່ປີ 2003 ເປັນຕົ້ນມາເຖິງປີ 2008, ທລຍ ໄດ້ເຄື່ອນວຽກງານໂດຍກວາມເອົາຈຳນວນປະຊາກອນທັງຫມົດ 744,000 ຄົນ ຢູ່ 1,913 ບ້ານ ຊຶ່ງປະກອບດ້ວຍ 252 ເຂດ ຂອງ 21 ເມືອງ ໃນ 5 ແຂວງ. ທັງໝົດທຸກກິດ

[3] ຜໝ = ຜູ້ຮັບເຫມົາ; ຊຊ-ຜໝ = ຊຸມຊົນ ແລະ ຜູ້ຮັບເຫມົາ; ຊຊ = ຊຸມຊົນ

ຈະກຳນັ້ນເຮັດໃຫ້ປະຊາຊົນຫລາຍກວ່າ 524,000 ຄົນ ຫລື 70% ຂອງຈຳນວນພົນລະເມືອງທັງຫມົດ[4] ໄດ້ຮັບຜົນປະໂຫຍດໂດຍກົງຈາກໂຄງການ ໃນນັ້ນມີແມ່ຍິງກວາມອັດຕາສ່ວນ 52%.

ເພື່ອໃຫ້ບັນລຸເປົ້າໝາຍກໍ່ຄືຈຸດປະສົງຂອງການຈັດຕັ້ງປະຕິບັດວຽກງານ ທລຍ ດ້ວຍເຫດນັ້ນ ທລຍ ໄດ້ສຸມໃສ່ການປັບປຸງພື້ນຖານໂຄງລ່າງໂດຍໄດ້ສ້າງເງື່ອນໄຂໃຫ້ປະຊາຊົນ ເຂົ້າເຖິງການບໍລິການຂອງລັດເພີ່ມຂຶ້ນໂດຍສະເພາະທາງດ້ານຕ່າງໆທີ່ກ່ຽວຂ້ອງກັບພື້ນຖານໂຄງລ່າງທີ່ຖືວ່າເປັນບັນຫາສຳຄັນຕົ້ນຕໍ ແລະ ລວມໄປເຖິງການຝຶກອົບຮົມຕ່າງໆ ເຊິ່ງມີລາຍລະອຽດຄື:

- **ດ້ານການສຶກສາ** ເຊິ່ງປະກອບມີການສະໜອງອຸປະກອນການສຶກສາ, ການໃຫ້ເບ້ຍລ້ຽງຄູ, ການສ້ອມແປງ ແລະ ກໍ່ສ້າງໂຮງຮຽນ ເຊິ່ງມີໂຮງຮຽນທັງໝົດຈຳນວນ 411 ແຫ່ງໄດ້ຮັບການກໍ່ສ້າງ ແລະ ສ້ອມແປງ;
- **ດ້ານສາທາລະນະສຸກ** ເຊິ່ງປະກອບມີການສະໜອງອຸປະກອນການແພດ (50 ຊຸດ) ລວມທັງໃຫ້ເບ້ຍລ້ຽງແພດ (27 ຄົນ), ການກໍ່ສ້າງສຸກສາລາ (38 ແຫ່ງ). ພ້ອມດຽວກັນນັ້ນກໍ່ໄດ້ມີການສະໜອງລະບົບນ້ຳລິນ, ນ້ຳບາດານ-ນ້ຳສ້າງ ແລະ ນ້ຳປະປາຊຸມຊົນ ເຊິ່ງມີທັງໝົດຈຳນວນ 859 ແຫ່ງ. ເຊິ່ງໄດ້ເຮັດໃຫ້ຊຸມຊົນຫລາຍກວ່າ 1000 ໝູ່ບ້ານທີ່ໄດຮັບຜົນປະໂຫຍດຈາກວຽກງານດັ່ງກ່າວ;
- **ຂະແໜງໂຍທາທິການ** ແມ່ນກ່ຽວຂ້ອງກັບການຍົກລະດັບເສັ້ນທາງຄົມມະນາຄົມ ແລະ ພະລັງງານ ຂະໜາດນ້ອຍຕ່າງໆ ບົນພື້ນຖານຄວາມຕ້ອງການຂອງຊາວບ້ານ ເຊິ່ງໄດ້ມີການຍົກລະດັບທາງທັງໝົດ 327 ເສັ້ນ, ການກໍ່ສ້າງ ແລະ ສ້ອມແປງຂົວຈຳນວນ 61 ແຫ່ງ, ຕໍ່ສາຍໄຟຟ້າເຂົ້າບ້ານ ຈຳນວນ 34 ແຫ່ງ ແລະ ສ້າງທໍ່ລອດທາງ 29 ແຫ່ງ. ທັງໝົດທີ່ໄດ້ກ່າວມານີ້ໄດ້ເປັນການເປີດຊ່ອງທາງໃຫ້ຊຸມຊົນ ສາມາດໄປມາຫາສູ່ລະຫວ່າງບ້ານຕໍ່ບ້ານ ແລະ ໄດ້ອຳນວຍຄວາມສະດວກ ໃນການນຳເອົາຜົນຜະລິດໃນຊຸມຊົນຂອງເຂົາເຈົ້າເພື່ອມາຂາຍໃນທ້ອງຕາຫລາດໄດ້ ຊາວບ້ານໃນຫລາຍໆໝູ່ບ້ານໄດ້ມີການແລກປ່ຽນສິນຄ້າ, ການຕິດຕໍ່ພົວພັນລະຫວ່າງບ້ານຕໍ່ບ້ານ, ລະຫວ່າງເຂດຕໍ່ເຂດ ແລະ ເມືອງຕໍ່ເມືອງໄດ້ຮັບການປັບປຸງໃນທາງທີ່ດີຂື້ນ.
- **ດ້ານກະສິກຳ** ເຊິ່ງຖືວາເປັນວຽກງານສຳຄັນທີ່ລັດຖະບານໃຫ້ຄວາມສຳຄັນ ເພາະມັນໄດ້ຕິດຕາມໂດຍກົງກັບການສ້າງລາຍຮັບໃຫ້ແກ່ຊຸມຊົນ ເຊິ່ງໄດ້ມີການການກໍ່ສ້າງ ແລະ ສ້ອມແປງຊົນລະປະທານທັງໝົດຈຳນວນ 126 ແຫ່ງ ເຊິ່ງຊາວບ້ານໄດ້ນຳໃຊ້ເຂົ້າໃນວຽກງານກະສິກຳໃນຊຸມຊົນຂອງເຂົາເຈົ້າຢ່າງມີປະສິດທິຜົນ; ແລະ
- **ວຽກງານຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ** ແມ່ນໄດ້ລວມເອົາກິດຈະກຳທີ່ກ່ຽວຂ້ອງກັບກິດຈະກຳສ້າງລາຍຮັບ (1,399 ຊຸດ), ວຽກງານຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ (176 ຊຸດ), ກຸ່ມທ້ອນເງິນ (115 ກຸ່ມ) ແລະ ອື່ນໆ

[4] ຈຳນວນຕົວເລກປະຊາກອນໃນຮອບວຽນທີ 4 (744,000 ຄົນ) ຊຶ່ງຖືວ່າເປັນຮອບວຽນທີ່ມີຈຳນວນພົນລະເມືອງກວາມຫລາຍກວ່າຮອບວຽນ ອື່ນໆ. ດັ່ງນັ້ນ, ຈຶ່ງຖືກຄັດເລືອກສຳລັບການລາຍງານ.

ລາຍລະອຽດຂອງຈຳນວນ ຜົນ ໄດ້ຮັບ ທັງຫມົດ ນັບແຕ່ຮອບວຽນທີ 1-5 ແມ່ນລະບຸໄວ້ໃນຕາຕະລາງ ລຸ່ມນີ້:

**ຕາຕະລາງ 3: ຜົນສຳເລັດຂອງ ທລຍ ນັບຕັ້ງແຕຮອບວຽນທີ 1-5**

| ລ/ດ | ຜົນໄດ້ຮັບ | ຫົວຫນ່ວຍ | ຈຳນວນລວມ |
|---|---|---|---|
| I | ຂະແຫນງສຶກສາ | | |
| | ກໍ່ສ້າງ ແລະ ສ້ອມແປງໂຮງຮຽນ | ແຫ່ງ | 411 |
| | ອຸປະກອນການສຶກສາ* | ຊຸດ | 1,460 |
| | ເບັ້ຍລ້ຽງຄູ ແລະ ຍົກລະດັບຄູ | ຄົນ | 72 |
| II | ກໍ່ສ້າງເສັ້ນທາງ ແລະ ພະລັງງານ | | |
| | ກໍ່ສ້າງ ແລະ ສ້ອມແປງເສັ້ນທາງ | ເສັ້ນ | 327 |
| | ກໍ່ສ້າງ ແລະ ສ້ອມແປງຂົວ | ແຫ່ງ | 61 |
| | ຕໍ່ໄຟຟ້າເຂົ້າບ້ານ | ແຫ່ງ | 34 |
| | ທໍ່ລອດທາງ | ຈຸດ | 29 |
| III | ຂະແຫນງສາທາ | | |
| | ກໍ່ສ້າງສຸກສາລາ | ແຫ່ງ | 38 |
| | ເບັ້ຍລ້ຽງແພດ ແລະ ຍົກລະດັບແພດ | ຄົນ | 27 |
| | ສິ່ງອຳນວຍຄວາມສະດວກຕ່າງໆ** | ຊຸດ | 50 |
| | ວິດຊືມ | ແຫ່ງ | 23 |
| | ນ້ຳບາດານ, ນ້ຳສ້າງ | ຫນ່ວຍ | 522 |
| | ລະບົບນ້ຳສະອາດ | ແຫ່ງ | 337 |
| IV | ໂຄງລ່າງພື້ນຖານດ້ານກະສິກຳ | | |
| | ກໍ່ສ້າງຊົນລະປະທານ*** | ແຫ່ງ | 126 |
| | ຝຶກອົບຮົມສັດຕະວະແພດ | ຄົນ | 9 |
| V | ກິດຈະກຳສ້າງລາຍຮັບ, ການຝຶກອົບຮົມ ແລະ ການປົກປັກຮັກສາສິ່ງແວດລ້ອມ | | |
| | ຫລັດສູດຝຶກອົບຮົມການສ້າງລາຍຮັບ | ຊຸດ | 1,399 |
| | ຝຶກອົບຮົມການສ້າງຄວາມເຂັ້ມແຂງ | ຊຸດ | 176 |
| | ກຸ່ມທ້ອນເງິນ | ກຸ່ມ | 115 |
| | ການລ້ຽງສັດ | ບ້ານ | 16 |
| | ປ່າສະຫງວນ-ວັງສະຫງວນ | ແຫ່ງ | 232 |
| | ຕະຫລາດ | ແຫ່ງ | 13 |

* ລວມມີ: ປື້ມຕຳລາການຮຽນ-ການສອນ, ໂຕະ-ຕັ່ງ.

** ສິ່ງອຳນວຍຄວາມສະດວກປະກອບດ້ວຍ: ເຄື່ອງມືການແພດ, ກ່ອງຢາປະຈຳບ້ານ.

*** ລວມມີ: ເຫມືອງ, ຝາຍກັ້ນນ້ຳ, ຝາຍນ້ຳລົ້ນ,

*ແຫລ່ງຂໍ້ມູນ: ຂໍ້ມູນສະບັບປັບປຸງ ປະຈຳເດືອນ ສິງຫາ 2008, ທີ່ໜ່ວຍງານຕິດຕາມປະເມີນຜົນຂັ້ນສູນກາງ*

ອີງຕາມຜົນໄດ້ຮັບທັງໝົດທີ່ໄດ້ກ່າວມາຈາກຂ້າງເທິງ ໂດຍສະເພາະບັນດາໂຄງການທີ່ກ່ຽວຂ້ອງກັບການຍົກລະດັບພື້ນຖານໂຄງລ່າງ ເຊິ່ງເຮົາສາມາດເວົ້າໄດ້ວ່າ ການຈັດຕັ້ງປະຕິບັດວຽກງານ ທລຍ ຕະ

ຫລອດໄລຍະ 5 ປີ (2003-2008), ເຮົາສາມາດເວົ້າໄດ້ວ່າການເຄື່ອນໄຫວວຽກງານດັ່ງກ່າວແມ່ນສາມາດບັນລຸເປົ້າໝາຍທຳອິດຂອງການຈັດຕັ້ງປະຕິບັດວຽກງານ ທລຍ ຄື: ຊ່ວຍເຫລືອຊາວບ້ານ ໃນການພັດທະນາໂຄງລ່າງຂະໜາດນ້ອຍ ແລະ ໃຫ້ເຂົາເຈົ້າໄດ້ ຮັບການບໍລິການດ້ານ ຕ່າງໆຕາມຄວາມຈຳເປັນ ແລະ ເໝາະສົມ ພ້ອມດຽວກັນນັ້ນ ທລຍ ກໍ່ສາມາດບັນລຸຈຸດປະສົງອື່ນໆ ຄືທີ່ໄດ້ກ່າວມາຂ້າງເທິງ. ຍ້ອນໝາກຜົນອັນຫລວງຫລາຍດັ່ງກ່າວ ທັງຝ່າຍລັດຖະບານ ແລະ ຜູ້ໃຫ້ທຶນແມ່ນໄດ້ເຫັນດີທີ່ຈະສະໜອງທຶນເພື່ອສືບຕໍ່ໂຄງການຕື່ມອີກ ສາມ ປີ ເຊິ່ງເປັນທຶນຊ່ວຍເຫລືອລ້າ ດັ່ງມີລາຍລະອຽດໃນພາກຕໍ່ໄປ (ພາກ II).

## II. ຂະບວນການວາງແຜນແບບມີສ່ວນຮ່ວມຕາມຮູບແບບຂອງ ທລຍ ໄລຍະສືບຕໍ່ 3 ປີ

ສຳລັບປີ 2008-2009, ທລຍ ຈະໄດ້ເລີ່ມຈັດຕັ້ງປະຕິບັດໂຄງການ ຮອບວຽນທີ 6 ຊຶ່ງແມ່ນ ໄລຍະສືບຕໍ່ຂອງໂຄງການໄລຍະໃໝ່ ນັບແຕ່ວັນທີ 1 ກໍລະກົດ 2008 - 30 ກັນຍາ 2011 ພາຍໃຕ້ທຶນຊ່ວຍເຫລືອລ້າຈາກທະນາຄານໂລກ ແລະ ອົງການຮ່ວມມືເພື່ອພັດທະນາ ປະເທດສະວິດເຊີແລນ (SDC) ໂດຍມີ ຈຳນວນເງິນລວມທັງໝົດ 20 ລ້ານໂດລາສະຫະລັດ. ໃນນັ້ນ, ທຶນຊ່ວຍເຫລືອລ້າ ຈາກທະນາຄານໂລກ ຈຳນວນ 15 ລ້ານໂດລາສະຫະລັດ ແລະ ຈາກອົງການຮ່ວມມື ແລະ ພັດທະນາປະ ເທດສະວິດເຊີແລນ ຈຳນວນ 5 ລ້ານໂດລາສະຫະລັດ; ແຜນນຳໃຊ້ງົບປະມານ 20 ລ້ານໂດລ່າສະຫະລັດ. ໃນໄລຍະສືບຕໍ່ໂຄງການແຕ່ຮອບວຽນທີ VI-VIII ຫລື ໃນສົກປີ 2008-2011 ຈະແບ່ງອອກ 3 ຮ່ວງໃຫຍ່ຄື:

1. **ຮ່ວງທີ 1:** ງົບປະມານສຳລັບລົງທຶນໃສ່ການຈັດຕັ້ງປະຕິບັດກິດຈະກຳດ້ານພື້ນຖານໂຄງລ່າງ, ການບໍລິການ ແລະ ການຝຶກອົບຮົມ 66%;
2. **ຮ່ວງທີ 2**: ງົບປະມານສຳລັບການເສີມສ້າງຄວາມອາດສາມາດໃຫ້ແກ່ອຳນາດການປົກຄອງ ທ້ອງຖິ່ນ ແລະ ເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ 15%; ແລະ
3. **ຮ່ວງທີ 3:** ງົບປະມານສຳລັບການບໍລິຫານລວມ ກຳນົດເພດານໄວ້ຢູ່ໃນລະດັບບໍ່ເກີນ 19%

ໃນໄລຍະສືບຕໍ່ ທລຍ ຈະໄດ້ສຸມໃສ່ໃນການຈັດຕັ້ງປະຕິບັດໂຄງການ ຢູ່ໃນຈຳນວນ 19 ເມືອງ. ໃນນັ້ນ, ຈຳນວນ 14 ເມືອງເປັນເມືອງເກົ່າທີ່ ທລຍ ໄດ້ຈັດຕັ້ງປະຕິບັດມາກ່ອນແລ້ວ, ສ່ວນ 5 ເມືອງທີ່ເຫລືອເປັນເມືອງໃຫມ່ທີ່ ຍັງບໍ່ທັນເຄີຍຈັດຕັ້ງປະຕິບັດກິດຈະກຳມາກ່ອນ. ສຳລັບຮອບວຽນທີ 6 ນີ້ ທລຍ ຈະໄດ້ຈັດຕັ້ງປະຕິບັດຢູ່ໃນ 6 ແຂວງ ເປົ້າຫມາຍ. ໃນນັ້ນ ແມ່ນກວາມເອົາ 5 ແຂວງເກົ່າ (ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ, ແລະ ຈຳປາສັກ) ແລະ 1 ແຂວງໃຫມ່ (ຫລວງນ້ຳທາ);

ສຸມໃສ່ຈັດຕັ້ງປະຕິບັດ 3 ໜ້າວຽກບູລິມະສິດຄື: (1). ວຽກງານດ້ານການປູກຝັງຈິດສຳນຶກ (2) ວຽກງານດ້ານການເສີມສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ (3) ຊ່ວຍໃນການພັດທະນາພື້ນຖານໂຄງລ່າງ, ການບໍລິການທີ່ຈຳເປັນໃນຂັ້ນພື້ນຖານໃຫ້ແກ່ຊຸມຊົນ, ຊ່ວຍໃນ

ການຝຶກອົບຮົມດ້ານຕ່າງໆຕາມຄວາມຮຽກຮ້ອງຕ້ອງການຂອງຊຸມຊົນ ແລະ ເອົາໃຈໃສ່ຕໍ່ວຽກງານປົກປັກຮັກສາ ສິ່ງແວດລ້ອມ.

## 2.1 ການຈັດລະດັບຄວາມທຸກຍາກ ຮອບວຽນທີ 6

ຂັ້ນຕອນທຳອິດ ຢູ່ໃນຂະບວນການວາງແຜນຄັດເລືອກໂຄງການຍ່ອຍຂອງ ທລຍ ເລີ່ມຈາກການເກັບກຳຂໍ້ມູນບ້ານ ຊຶ່ງໃນຮອບວຽນທີ 6 ນີ້, ທລຍ ໄດ້ປັບປຸງຮູບແບບວິທີການເກັບກຳຂໍ້ມູນບ້ານແນໃສ່ເພື່ອໃຫ້ໄດ້ຮັບຂໍ້ມູນທີ່ຊັດເຈນ ແລະ ຊ່ວຍໃຫ້ການຈັດແບ່ງທຶນສອດຄ່ອງກັບລະດັບຄວາມທຸກຍາກຂອງປະຊາຊົນໃນແຕ່ລະກຸ່ມບ້ານ. ການເກັບຂໍ້ມູນບ້ານດັ່ງກ່າວ ມີເປົ້າໝາຍທີ່ຈະແຍກໃຫ້ເຫັນລະດັບຄວາມທຸກຍາກ ຕາມແຕ່ລະດັບຂອງການເຂົ້າເຖິງການບໍລິການ ໂດຍອີງໃສ່ຕົວວັດແທກ 4 ດ້ານຕົ້ນຕໍຄື: (1) ສາມາດເຂົ້າເຖິງການບໍລິການດ້ານການສຶກສາ, (2) ເຂົ້າເຖິງການບໍລິການປິ່ນປົວ (ສຸກສາລາ), (3) ມີເສັ້ນທາງເຂົ້າເຖິງບ້ານ, ແລະ (4) ສາມາດ ເຂົ້າເຖິງການບໍລິການທາງດ້ານແຫຼ່ງນ້ຳສະອາດ. ຕົວຢ່າງ: ຖ້າບ້ານໃດບໍ່ສາມາດເຂົ້າເຖິງການບໍລິການໃນດ້ານໃດເລີຍ ກໍ່ຈະຖືກຈັດເປັນບ້ານທີ່ມີຄວາມທຸກຍາກທີ່ສຸດ ຊຶ່ງຈັດເປັນບູລິມະສິດ ເປົ້າໝາຍຂອງການຊ່ວຍເຫຼືອ, ຖ້າບ້ານໃດທີ່ສາມາດເຂົ້າເຖິງການບໍລິການພຽງແຕ່ ດ້ານດຽວກໍ່ຈະຖືກກຳນົດເປັນບ້ານທຸກຍາກລະດັບນຶ່ງ, ຖ້າເຂົ້າເຖິງການບໍລິ ການໃນ 02 ດ້ານ ກໍ່ຈະຖືກຈັດເປັນບ້ານທີ່ມີ ລະດັບຄວາມທຸກຍາກ ອັນດັບທີ ສອງ ແລະ ອື່ນໆ, ພິເສດຖ້າບ້ານໃດສາມາດເຂົ້າເຖິງການບໍລິການທັງໝົດ ໃນ 4 ດ້ານກໍ່ຈະຖືກຈັດ ຢູ່ ໃນບ້ານທຸກຍາກລະດັບທີ 4 ຫຼື ເປັນບ້ານທີ່ຢູ່ໃນສະຖານະ ທີ່ດີກວ່າບ້ານອື່ນໆ ແລະ ຈະໄດ້ຮັບການພິຈາລະນາໃນການໄດ້ຮັບໂຄງການເປັນບູລິມະສິດຖັດໄປ.

ສຳລັບ ຮອບວຽນທີ 6 ນີ້ໄດ້ດຳເນີນການເກັບກຳຂໍ້ມູນບ້ານຢູ່ໃນ 1,471 ບ້ານ, ກວມເອົາ 195 ກຸ່ມບ້ານພັດທະນາ, 19 ເມືອງທີ່ເປັນບູລິມະສິດຂອງລັດຖະບານ, ຢູ່ໃນ 6 ແຂວງເປົ້າໝາຍ ຊຶ່ງປະກອບດ້ວຍພົນລະເມືອງຈຳນວນທັງໝົດ 620,164 ຄົນ (ຍິງກວາມ 52%). ປະກອບດ້ວຍຄອບຄົວຈຳນວນທັງໝົດ 106,875 ຄອບຄົວ (ຄອບຄົວທີ່ທຸກຍາກກວາມອັດຕາສ່ວນ 31%). ໃນນັ້ນ, ໄດ້ກວາມເອົາຈຳນວນຊົນເຜົ່າ ທັງໝົດຈຳນວນ 28[5] ຊົນເຜົ່າປະກອບດ້ວຍຈຳນວນພົນລະເມືອງທັງໝົດ 620,164 ຄົນ (ຍິງກວາມ 52%). ໃນນັ້ນ, ຊົນເຜົ່າລາວລຸ່ມ ກວາມອັດຕາສ່ວນສູງກວ່າໝູ່ບໍ່ວ່າຈະເປັນທາງດ້ານຈຳນວນບ້ານ ແລະ ຈຳນວນ ພົນລະເມືອງ, ກວາມອັດຕາສ່ວນ 23% ແລະ 25% ຂອງຈຳນວນພົນລະເມືອງທັງໝົດ (ຍິງ 24%), ຖັດມາແມ່ນຊົນເຜົ່າມົ້ງທີ່ກວາມອັດຕາສ່ວນ ທັງໝົດ 19% ແລະ ຊົນເຜົ່າອື່ນໆ ທີ່ກວາມອັດຕາສ່ວນໜ້ອຍ. ອີງຕາມຜົນຂອງການລາຍ ງານຈາກຖານຂໍ້ມູນ ທລຍ ໄດ້ບອກໃຫ້ຮູ້ວ່າໃນຈຳນວນ ບ້ານທຸກທັງໝົດ (ບ້ານທຸກລະດັບ 0-3) ທີ່ມີຄວາມເປັນ ໄປໄດ້ທີ່ຈະໄດ້ຮັບການຊ່ວຍເຫຼືອຈາກ ທລຍ ກວາມອັດຕາສ່ວນ 76%, ສ່ວນທີ່ເຫຼືອ 24% (ບ້ານທີ່ມີສະຖານະ ພາບດີກວ່າ) ກໍ່ຈະໄດ້ຮັບການພິຈາລະນາເປັນ ລຳດັບຕໍ່ມາຕາມເງື່ອນໄຂຕົວຈິງ.

[5] ຂໍ້ມູນດັ່ງກ່າວອາດເພີ່ມຈຳນວນຂຶ້ນ ເນື່ອງຈາກຂໍ້ມູນຈຳນວນ 28 ຊົນເຜົ່າດັ່ງກ່າວບໍ່ໄດ້ລວມຊົນເຜົ່າທີ່ຢູ່ໃນ 3 ເມືອງຂອງແຂວງຫຼວງນ້ຳທາ ແລະ ເມືອງທ່າໂທມຂອງແຂວງຊຽງຂວາງເຂົ້າ ເນື່ອງຈາກເປັນແຂວງໃໝ່ທີ່ ທລຍ ບໍ່ໄດ້ດຳເນີນການເກັບກຳຂໍ້ມູນເອງ, ແຕ່ອີງໃສ່ຂໍ້ມູນຈາກຫ້ອງການ ແຜນການ ແລະ ການລົງທຶນ ທີ່ບໍ່ສາມາດສະໜອງຂໍ້ມູນທາງດ້ານຊົນເຜົ່າໃຫ້ໄດ້.

## 2.2 ການວິໄຈຜົນໄດ້ຮັບຂອງກອງປະຊຸມຕັດສິນ ຮອບວຽນທີ 6

ກອງປະຊຸມຕັດສິນໂຄງການຍ່ອຍຄັ້ງສຸດທ້າຍຂັ້ນເມືອງໄດ້ຈັດຂຶ້ນພ້ອມກັນໃນທົ່ວ 6 ແຂວງ ລະຫວ່າງ ວັນທີ 10 - 15 ພະຈິກ ທີ່ຜ່ານມາ, ກອງປະຊຸມດັ່ງກ່າວການຈັດຂຶ້ນໂດຍໂຄງການ ທລຍ, ປະກອບມີຂະແໜງການ ແລະ ໂຄງການ/ອົງການທີ່ກ່ຽວຂ້ອງເຂົ້າຮ່ວມ, ຕົວແທນກຸ່ມບ້ານຈາກ 195 ກຸ່ມບ້ານ ມີພົນລະເມືອງໝົດ 1,912 ຄົນ, ເປັນເພດຍິງກວາມ 545 ຄົນ ຫຼື ເທົ່າກັບ 29%. ກອງປະຊຸມຕັດສິນບັນດາໂຄງການຍ່ອຍທີ່ເປັນບູລິມະສິດຂອງແຕ່ລະກຸ່ມ ບ້ານທີ່ຖືກຈັດຂຶ້ນຢູ່ແຕ່ລະເມືອງໃນຕົ້ນເດືອນ ພະຈິກ 2008 ຜ່ານມາ ນີ້ໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາ ໂຄງການຍ່ອຍທັງໝົດ 355 ໂຄງການ, ມີມູນຄ່າທັງໝົດປະ ມານ 48,11 ຕື້ກີບ (ທຶນສະໜັບສະໜູນຈາກ ທລຍ ມີປະມານ 40,82 ຕື້ກີບ ແລະ ທຶນປະກອບສ່ວນຈາກ ຊຸມຊົນ 7,28 ຕື້ກີບ).

ການລົງທຶນໃນຈຳນວນ 355 ໂຄງການຍ່ອຍນັ້ນໄດ້ຈັດແບ່ງອອກເປັນ 2 ປະເພດຄື: ການລົງທຶນໃສ່ ໂຄງການຍ່ອຍດ້ານພື້ນຖານໂຄງລ່າງມີ 223 ໂຄງການຍ່ອຍ ຄິດເປັນມູນຄ່າທັງໝົດປະມານ 45,61 ຕື້ກີບ, ໃນນັ້ນທຶນທີ່ໄດ້ຮັບການສະໜັບສະໜູນຈາກ ທລຍ ມີ 38,33 ຕື້ກີບ ຫຼື ເທົ່າກັບ 84% ແລະ ທຶນປະກອບສ່ວນຈາກຊຸມຊົນ 7,28 ຕື້ກີບ ຫຼື ເທົ່າກັບ 16% ແລະ ນອກຈາກນັ້ນ ກໍ່ຍັງມີໂຄງການຍ່ອຍດ້ານຝຶກ ອົບຮົມທີ່ກອງທຶນ ( ທລຍ) ຈະໃຫ້ການສະໜັບສະໜູນທຶນທັງໝົດ 100% ມີຈຳນວນ 132 ໂຄງການຍ່ອຍ ຊຶ່ງຄິດເປັນມູນຄ່າປະມານ 2,49 ຕື້ກີບ.

**ຕາຕະລາງ 4: ຈຳນວນໂຄງການ ແລະ ງົບປະມານທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນທີ 6**

| ລ/ດ | ເມືອງ | ໂຄງການ | | ທຶນຈາກ ທລຍ | | ທຶນປະກອບສ່ວນ | ລວມຍ່ອຍ | ລວມທັງໝົດ (e+f) |
|---|---|---|---|---|---|---|---|---|
| | | ຄລ | ຝອຮ | ດ້ານການຝຶກອົບຮົມ | ດ້ານໂຄງລ່າງ | ຈາກປະຊາຊົນດ້ານໂຄງລ່າງ | | |
| 1 | 2 | 3 | 4 | 5 | 6 | 7 | 8 = 5+6 | 9 = 7+8 |
| ຫົວພັນ | 5 | 71 | 20 | 488,771,552.00 | 9,949,974,956.03 | 2,436,711,436.85 | 10,438,746,508.03 | 12,875,457,944.87 |
| ຫຼວງນ້ຳທາ | 3 | 38 | 27 | 359,719,849.30 | 7,731,436,790.61 | 1,266,494,472.36 | 8,091,156,639.91 | 9,357,651,112.26 |
| ຊຽງຂວາງ | 3 | 27 | 17 | 301,300,016.00 | 5,393,178,224.45 | 1,107,092,116.11 | 5,694,478,240.45 | 6,801,570,356.56 |
| ສະຫວັນນະເຂດ | 4 | 45 | 26 | 588,211,051.20 | 8,600,219,780.55 | 1,253,129,321.00 | 9,188,430,831.75 | 10,441,560,152.75 |
| ສາລະວັນ | 2 | 20 | 16 | 294,222,075.00 | 3,922,279,155.49 | 637,742,197.60 | 4,216,501,230.49 | 4,854,243,428.09 |
| ຈຳປາສັກ | 2 | 22 | 26 | 463,119,930.00 | 2,736,896,447.34 | 581,478,689.49 | 3,200,016,377.34 | 3,781,495,066.83 |
| ລວມທັງໝົດ | 19 | 223 | 132 | 2,495,344,473.50 | 38,333,985,354.46 | 7,282,648,233.40 | 40,829,329,827.96 | 48,111,978,061.36 |
| ເປີເຊັນການລົງທຶນດ້ານຝຶກອົບຮົມ ແລະ ດ້ານພື້ນຖານໂຄງລ່າງ | | | | 6% | 94% | | | |
| ເປີເຊັນການລົງທຶນຂອງ ທລຍ ແລະ ການປະກອບສ່ວນຂອງຊຸມຊົນ | | | | | | 16% | 84% | |

ໝາຍເຫດ:

ຄລ: ໂຄງການພື້ນຖານໂຄງລ່າງ

ຝອຮ : ໂຄງການຝຶກອົບຮົມ

*ແຫລ່ງຂໍ້ມູນ: ຂໍ້ມູນສະບັບປັບປຸງ ປະຈຳເດືອນ ສິງຫາ 2009, ທີ່ໜ່ວຍງານຕິດຕາມປະເມີນຜົນຂັ້ນສູນກາງ*

ຄຽງຄູ່ກັບຜົນສຳເລັດຂອງກອງປະຊຸມຕັດສິນຄັ້ງສຸດທ້າຍຂັ້ນເມືອງ ສຳລັບ ຮອບວຽນທີ 6 ດັ່ງກ່າວນີ້, ເຫັນວ່າຍັງມີບາງຈຸດທີ່ຍັງເປັນສິ່ງທ້າທາຍ ແລະ ຕ້ອງໄດ້ຮັບການແກ້ໄຂ ສຳລັບ ທລຍ ກໍ່ຄືຢູ່ໃນຮອບວຽນທີ 6 ນີ້ ທລຍ ໄດ້ອີງໃສ່ການຄິດໄລ່ແບບມາດຕະຖານຂອງໂຄງການຍ່ອຍທີ່ຮຽກຮ້ອງໃຫ້ນຳໃຊ້ ໂດຍກະຊວງຕ່າງໆທີ່ກ່ຽວຂ້ອງ ແລະ ຜູ້ໃຫ້ທຶນ ແນໃສ່ເພື່ອເປັນການຍົກລະດັບຄຸນນະພາບຂອງບັນດາໂຄງການຍ່ອຍໃຫ້ສູງຂຶ້ນ. ຜົນໄດ້ຮັບຈາກການຄິດໄລ່ເຫັນວ່າມູນຄ່າໂຄງການຍ່ອຍ ສ່ວນໃຫຍ່ເກີນເພດານທີ່ ທລຍ ກຳນົດໄວ້ກໍ່ຄື 35,000 ໂດລາສະຫະລັດ

ຕໍ່ນຶ່ງໂຄງການ. ດັ່ງນັ້ນ, ທລຍ ຈຶ່ງໄດ້ສະເໜີໃຫ້ທາງກະຊວງກ່ງວຂ້ອງຕ່າງໆທົບທວນມາດຕະຖານການກໍ່ສ້າງດັ່ງກ່າວນັ້ນຄືນເພື່ອເຮັດໃຫ້ ມາດຕະຖານການກໍ່ສ້າງພໍດີກັບເພດານງົບປະມານຂອງ ທລຍ.

ຕາຕະລາງ 5: ລາຍລະອຽດຂອງການຈັດຕັ້ງປະຕິບັດຂອງ ທລຍ ນັບແຕ່ເລີ່ມຕົ້ນຈົນ ທັນວາ 2009

| ລາຍລະອຽດ | ຮອບວຽນ I | ຮອບວຽນ II | ຮອບວຽນ III | ຮອບວຽນ IV | ຮອບວຽນ V | ຮອບວຽນ VI | ຮອບວຽນ VII | ລວມ 7 ຮອບວຽນ |
|---|---|---|---|---|---|---|---|---|
| | 2003-04 | 2004-05 | 2005-06 | 2006-07 | 2007-08 | 2008-09 | 2009-10 | |
| 1. ຫົວພັນ | 3 | 6 | 6 | 7 | 7 | 5 | 5 | 5 |
| 2. ສະຫວັນນະເຂດ | 3 | 4 | 4 | 4 | 4 | 4 | 4 | 4 |
| 3. ຈຳປາສັກ | 4 | 4 | 4 | 4 | 4 | 2 | 2 | 2 |
| 4. ຊຽງຂວາງ | | | 3 | 3 | 3 | 3 | 3 | 3 |
| 5. ສາລະວັນ | | | 3 | 3 | 3 | 2 | 2 | 2 |
| 6. ຫລວງນໍ້າທາ | | | | | | 3 | 3 | 3 |
| 7. ເຊກອງ | | | | | | | 2 | 2 |
| ຈຳນວນເມືອງທັງຫມົດ | 10 | 14 | 20 | 21 | 21 | 19 | 21 | 21 |
| ຈຳນວນແຂວງທັງຫມົດ | 3 | 3 | 5 | 5 | 5 | 6 | 7 | 7 |
| ຈຳນວນກຸ່ມບ້ານທັງຫມົດ | 121 | 188 | 239 | 252 | 161 | 195 | 214 | 252 |
| ຈຳນວນບ້ານທັງຫມົດ | 913 | 1,412 | 1,913 | 1,880 | 1,268 | 1471 | 1567 | 1,567 |
| ຈຳນວນໂຄງການທັງຫມົດ | 248 | 431 | 533 | 548 | 307 | 355 | 463 | 2,885 |
| ຈຳນວນໂຄງການທີ່ສຳເລັດ (12/2009) | 248 | 431 | 533 | 548 | 306 | 341 | 0 | 2,407 |
| ງົບປະມານຕາມແຜນ (ຕື້ກີບ) | 11 | 32 | 44 | 45 | 35 | 39 | 51.69 | 206 |
| ງົບປະມານທີ່ໂອນເຂົ້າບັນຊີເຂດ (ຕື້ກີບ) (12/2009) | 11 | 32 | 44 | 44 | 34.85 | 35.06 | 0 | 200.91 |

ແຫລ່ງຂໍ້ມູນ: ໜ່ວຍງານຕິດຕາມ-ປະເມີນຜົນ ຄັ້ງວັນທີ 05 ມັງກອນ 2010

## 2.3. ການຈັດຕັ້ງປະຕິບັດວຽກງານໃນຮອບວຽນທີ 7

ໃນຮອບວຽນທີ 7 ນີ້ ວຽກງານ ທລຍ ໄດ້ກວາມເອົາ 6 ແຂວງ, 19 ເມືອງ, 195 ກຸ່ມບ້ານພັດທະນາ ແລະ 1,425[6] ບ້ານ ປະກອບ ດ້ວຍພົນລະເມືອງທັງໝົດ 626,021 ຄົນ, ໃນນັ້ນເປັນຍິງ 309,826 ຄົນ (ຕາຕະລາງ6).

[6] ຈຳນວນບ້ານຫຼຸດໃສ່ການລາຍງານໃນຮອບວຽນຜ່ານມາແມ່ນມີການປ່ຽນແປງ ຍ້ອນມີການໂຮມບ້ານເຂົ້າກັນ ຕົວເລກປັບປຸງຄັ້ງວັນທີ 07/07/09

ແຕ່ຫລັງຈາກກອງປະຊຸມສະພາບໍລິຫານຂອງ ທລຍ ຄັ້ງທີ 13 ທີ່ແຂວງຫລວງນ້ຳທາ ໃນຕົ້ນເດືອນ ກໍລະກົດ 2009 ທີ່ຜ່ານມາ ກອງປະຊຸມແມ່ນເຫັນດີໃຫ້ຂະຫຍາຍໜ້າວຽກຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ໄປຕື່ມ 2 ເມືອງຂອງ ແຂວງ ເຊກອງຄື: ເມືອງກະລຶມ ແລະ ດັກຈຶງ ເຊິ່ງປະກອບດ້ວຍ 19 ກຸ່ມບ້ານ ແລະ 192 ບ້ານ ໂດຍເລັ່ງໃຫ້ທັນຈັດຕັ້ງປະຕິບັດນັບແຕ່ຮອບວຽນທີ 7 (ສົກປີ 2009-2010) ເປັນຕົ້ນໄປ.

<u>**ຕາຕະລາງທີ 6 : ຂອບເຂດຈັດຕັ້ງປະຕິບັດວຽກງານ ທລຍ ຮອບວຽນທີ 7 (ບໍ່ລວມແຂວງ ເຊກອງ)**</u>

| **ແຂວງ:** | **ພົນລະເມືອງ** | **ຈຳນວນບ້ານ** | **ກຸ່ມບ້ານ** | **ເມືອງ** |
|---|---|---|---|---|
| ຫຼວງນ້ຳທາ | 71,448 | 186 | 29 | ວຽງພູຄາ, ລອງ, ນາແລ |
| ຫົວພັນ | 177,187 | 478 | 70 | ຊຽງຄໍ້, ວຽງໄຊ, ຫົວເມືອງ, ຊຳໃຕ້, ວຽງທອງ |
| ຊຽງຂວາງ | 83,136 | 222 | 25 | ຄູນ, ໜອງແຮດ, ທ່າໂທມ |
| ສະຫວັນນະເຂດ | 152,657 | 328 | 51 | ເຊໂປນ, ນອງ, ວິລະບູລີ, ພີນ |
| ສາລະວັນ | 37,973 | 110 | 9 | ຕະໂອ້ຍ, ສະໝ້ວຍ |
| ຈຳປາສັກ | 99,202 | 101 | 11 | ບາຈຽງ, ສຸຂຸມາ |
| **ລວມ 6 ແຂວງເກົ່າ** | **626,021** | **1,425** | **195** | **19 ຕົວເມືອງ** |

**ໝາຍເຫດ: ການຈັດຕັ້ງປະຕິບັດ ໂຄງການໃນຮອບວຽນທີ 7 ປະຈຸບັນແມ່ນຢູ່ໃນໄລຍະຈັດລຽງບູລິມະສິດຄວາມຕ້ອງການຂັ້ນເມືອງ ສຳລັບແຂວງເກົ່າ (ໃນຕາຕະລາງ 4). ສຳລັບແຂວງໃໝ່ຄື ແຂວງ ເຊກອງແມ່ນຢູ່ໃນໄລຍະກະກຽມທີມງານທີ່ຈະເຮັດວຽກຢູ່ແຂວງດັ່ງກ່າວ ແລະ ກຳລັງກະກຽມການເກັບກຳຂໍ້ມູນບ້ານ, ບູລິມະສິດຄວາມຕ້ອງການຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ເຊິ່ງຈະໄດ້ຈັດຂຶ້ນໃນໄລຍະດຽວກັນ ຢ່າງຊ້າສຸດຈະໃຫ້ສຳເລັດກ່ອນເດືອນຕຸລາ 2009 ນີ້.**

ສຳລັບການຈັດຕັ້ງປະຕິບັດວຽກງານ ທລຍ ໃນຮອບວຽນທີ VII ປະຈຸບັນແມ່ນສຳເລັດການຈັດກອງປະຊຸມຈັດລຽງບຸລິມະສິດ ຂັ້ນເມືອງ ໃນທົ່ວ 6 ແຂວງເປົ້າໝາຍຂອງ ທລຍ.ສ່ວນແຂວງ ເຊກອງ ແມ່ນກຳລັງຢູ່ໃນໄລຍະການສຳຫລວດ ແລະ ຝຶກອົບຮົມໃຫ້ທີມງານໃໝ່ ພ້ອມທັງໄດ້ເກັບກຳຂໍ້ມູນ ແລະ ຈັດລຽງບຸລິມະສິດຂັ້ນເມືອງ ເຊິ່ງລາຍລະອຽດແມ່ນຈະໄດ້ລາຍງານເດືອນຕໍ່ໄປ. ຫລັງຈາກສຳເລັດກອງປະຊຸມຈັດລຽງບູລິມະສິດຂັ້ນເມືອງ ໃນ 6 ແຂວງ ເປົ້າໝາຍທີ່ທາງ ທລຍ ໄດ້ຈັດຕັ້ງປະຕິບັດ, ມີຈຳນວນ 282 ໂຄງການທີ່ເປັນໂຄງການກໍ່ສ້າງໄດ້ຖືກຈັດລຽງຕາມບູລິມະສິດຄວາມຕ້ອງການ ໃນແຕ່ລະແຂວງ ເຊິ່ງລາຍລະອຽດຈະໄດ້ລາຍງານໃນເດືອນຕໍ່ໄປ ເພາະປະຈຸບັນທີມງານກຳລັງສັງລວມຂໍ້ມູນໂຄງການຍ່ອຍທີ່ເປັນການຝຶກອົບຮົມ ເພື່ອຈະໄດ້ສັງລວມ ແລະ ລາຍງານຈຳນວນໂຄງການທັງໝົດ.

## III.ດ້ານດີ, ດ້ານອ່ອນ (ຂໍ້ຄົງຄ້າງ) ແລະ ບົດຮຽນທີ່ຖອດຖອນໄດ້.

ຜ່ານການຈັດຕັ້ງປະຕິບັດໂຄງການ ນັບແຕ່ເລີ່ມຕົ້ນຈົນເຖິງປະຈຸບັນສາມາດສະຫລຸບຖອດຖອນບົດຮຽນໃນບາງດ້ານຄືດັ່ງລຸ່ມນີ້:

### 3.1. ດ້ານດີ (ຜົນກະທົບດ້ານບວກຕໍ່ການພັດທະນາເສດຖະກິດ-ສັງຄົມ)

- ການຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນສາມາດເຫັນຜົນປະຈັກຕາໃນເວລາສັ້ນ ແລະ ກວາມທຸກບ້ານເປົ້າໝາຍຂອງໂຄງການໂດຍບໍ່ມີຂໍ້ຍົກເວັ້ນບ້ານໃດນຶ່ງ, ອັນເຮັດໃຫ້ປະຊາຊົນມີຄວາມພໍໃຈ ແລະ ຫັນມາສົນໃຈນຳວຽກຂອງກອງທຶນນັບມື້ເພີ່ມຂຶ້ນ. ການຈັດຕັ້ງປະຕິບັດໂຄງການເປັນລາຍປີ ແລະ ບໍ່ແກ່ຍາວຊັກຊ້າ;
- ກອງທຶນ ທລຍ ເປັນໂຄງການທີ່ມຸ້ງເນັ້ນສະໜອງສິ່ງທີ່ຈຳເປັນພື້ນຖານໃຫ້ແກ່ຊຸມຊົນ. ດັ່ງນັ້ນ, ບັນດາພື້ນຖານໂຄງລ່າງສິ່ງປຸກສ້າງທີ່ສ້າງຂຶ້ນ ຫລື ການບໍລິການ ລວມທັງການຝຶກອົບຮົມໃຫ້ມັນຈະເປັນພື້ນຖານໃນການປັບປຸງ ແລະ ແກ້ໄຂບັນຫາໃນການດຳລົງຊີວິດຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ;
- ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ເປັນຂະບວນການສ້າງຄວາມເຂັ້ມແຂງ ແລະ ຄວາມເປັນເຈົ້າການໃຫ້ຊຸມຊົນໄດ້ດີ ຍ້ອນການນຳໃຊ້ລະບຽບຫລັກການພັດທະນາແບບມີສ່ວນຮ່ວມໃນທຸກຂັ້ນຕອນ ແລະ ມອບຄວາມຮັບຜິດຊອບໃຫ້ຊຸມຊົນແຕ່ຫົວທີ;
- ເປັນການລົງທຶນທີ່ຄຸ້ມຄ່າທີ່ສຸດ ແລະ ນຳໃຊ້ງົບປະມານບໍລິຫານນ້ອຍທີ່ສຸດ ຖ້າທຽບໃສ່ໂຄງການ ອື່ນໆຊຶ່ງມີຄ່າບໍລິຫານສູງກ່ວາ 40%;
- ເປັນໂຄງການທີ່ໃຫ້ຄ່າຕອບແທນສູງຕໍ່ຊຸມຊົນ ແລະ ປະຢັດງົບປະມານ ( ຂົວທີ່ ທລຍ ສ້າງຮ່ວມກັບຊຸມຊົນ 250 ລ້ານກີບ ຕ້ອງກາຍເປັນ 700 ລ້ານ ຖ້າຫາກຈັດຕັ້ງປະຕິບັດໂດຍການນຳໃຊ້ແຫລ່ງທຶນອື່ນ);
- ສາມາດດຶງດູດຄວາມສົນໃຈຂອງສັງຄົມ ແລະ ອົງການທີ່ໃຫ້ການຊ່ວຍເຫລືອຈາກພາຍນອກ ຍ້ອນຫລັກການການບໍລິຫານຂອງໂຄງການທີ່ຮັບຜິດຊອບຕົນເອງທາງດ້ານການບໍລິຫານ ແລະ ດ້ານການເງິນຊຶ່ງເຮັດໃຫ້ວຽກງານວ່ອງໄວຢູ່ຕລອດເວລາ.
- ເປັນຂະບວນການທີ່ເພີ່ມຄວາມຮູ້ຄວາມສາມາດ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ທີມງານທີ່ ຮັບຜິດຊອບໂຄງການໃນທຸກລະດັບ. ນອກຈາກນັ້ນອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ກໍມີໂອກາດໄດ້ຍົກລະດັບຄວາມຮັບຮູ້ຈາກຂະບວນການພັດທະນາແບບມີສ່ວນຮ່ວມແຕ່ລຸ່ມຂຶ້ນເທິງອີກດ້ວຍ.

### 3.2. ດ້ານອ່ອນ (ບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ປັບປຸງແກ້ໄຂ)

- ເຖິງວ່າການແກ້ໄຂຄວາມທຸກຍາກຂອງ ທລຍ ວາງເປົ້າຫມາຍໃສ່ບ້ານເປັນຫລັກ ແລະ ເຖິງວ່າໝົດທຸກຄອບຄົວໃນບ້ານລວມທັງຜູ້ທຸກຍາກຈະໄດ້ຮັບຜົນປະໂຫຍດກໍ່ຕາມແຕ່ການແກ້ໄຂຄວາມທຸກຍາກຂອງຫົວໜ່ວຍຄອບຄົວທີ່ທຸກຍາກແທ້ໆນັ້ນຍັງເຮັດບໍ່ໄດ້;
- ເນື່ອງຈາກຄວາມຕ້ອງການຂອງຊຸມຊົນມີມະຫາສານໃນແຕ່ລະດ້ານແຕ່ກຳລັງແຮງ ແລະ ກຳລັງຊັບຂອງ ທລຍ ມີຈຳກັດຈຶ່ງບໍ່ສາມາດແກ້ໄຂໄດ້ໝົດທຸກບັນຫາ. ນອກຈາກນັ້ນ, ຄຸນນະພາບຂອງສິ່ງກໍ່ສ້າງບາງປະເພດຍັງບໍ່ທັນສູງເນື່ອງຈາກໃຊ້ໄລຍະເວລາ ແລະ ຈຳນວນທຶນຈຳກັດໃນການຈັດຕັ້ງປະຕິບັດ;
- ຈຳນວນເມືອງທີ່ຕ້ອງສຸມໃສ່ແກ້ໄຂຄວາມທຸກຍາກມີທັງໝົດ 72 ເມືອງ ໃນທົ່ວປະເທດແຕ່ ທລຍ ສາມາດປະຕິບັດໄດ້ຢູ່ພຽງແຕ່ 21 ເມືອງຂອງ ຫ້າ ແຂວງເທົ່ານັ້ນ ແລະ ທັງບໍ່ສາມາດຂະຫຍາຍອອກໄປອີກໄດ້ຍ້ອນເງື່ອນໄຂຂອງສັນຍາເງິນກູ້ ແລະ ຄວາມສາມາດຕົວຈິງໃນແຕ່ລະດ້ານຂອງ ທລຍ.

### 3.3 ບາງບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດໂຄງການ.

- ຄວາມເປັນເອກະພາບກັນພາຍໃນທີມງານເປັນຂອດຕັດສິນເຮັດໃຫ້ວຽກສຳເລັດໄດ້ຕາມແຜນ;
- ການຫຼຸດຜ່ອນ ຫຼື ການແກ້ໄຂຄວາມທຸກຍາກຕ້ອງເອົາໃຈໃສ່ວຽກງານການນຳພາແນວຄິດ ແລະ ໃຫ້ການຊ່ວຍເຫຼືອທີ່ເປັນຮູບປະທຳເປັນຫຼັກຊຶ່ງຕ້ອງໄດ້ໃຊ້ເວລາ;
- ຄວາມຮູ້ສຶກຕື່ນຕົວ ແລະ ການປັບປ່ຽນຮູບແບບການດຳລົງຊີວິດຂອງຊຸມຊົນເປັນສິ່ງຈຳເປັນໃນຂະບວນການແກ້ໄຂເພື່ອລຶບລ້າງຄວາມທຸກຍາກ;
- ຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນເປັນສິ່ງຈຳເປັນເພື່ອເຮັດສຳເລັດການແກ້ໄຂຄວາມທຸກຍາກ;
- ການກໍ່ສ້າງພື້ນຖານໂຄງລ່າງ ຄວນມີວິຊາການປະຈຳພາກສະໜາມຕະຫຼອດເວລາການກໍ່ສ້າງຈຶ່ງຈະຮັບປະກັນຄຸນນະພາບຂອງໂຄງການໄດ້;
- ການປະສານສົມທົບ ແລະ ແລກປ່ຽນຂໍ້ມູນຂ່າວສານຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງຈະຊ່ວຍເຮັດໃຫ້ການແກ້ໄຂບັນຫາໄດ້ຖືກຕ້ອງ ແລະ ປະສະຈາກຂໍ້ຂັດແຍ່ງ.
- ຮູບແບບການຈັດຕັ້ງປະຕິບັດຂອງ ທລຍ ແມ່ນເປັນໄປຕາມຮູບແບບການພັດທະນາແບບມີສ່ວນຮ່ວມທັງຈາກພາກສ່ວນຂະແໜງການກ່ຽວຂ້ອງ, ແລະ ເຮັດຕາມຂະບວນການແຕ່ລຸ່ມ ຂຶ້ນເທິງ, ຊຸມຊົນເປັນຜູ້ປຶກສາຫາລື ແລະ ຕັດສິນໃຈຄັດເລືອກເອົາໂຄງການເອງ ເຮັດໃຫ້ໂຄງການທີ່ໄດ້ຮັບແມ່ນ ມາຈາກປະຊາຊົນຢ່າງແທ້ຈິງ ແລະ ຖືກຕ້ອງກັບສະພາບຕົວຈິງຂອງການພັດທະນາໃນທ້ອງຖິ່ນ ໃດນຶ່ງ;
- ການຈັດຕັ້ງປະຕິບັດວຽກງານຫລຸດຜ່ອນຄວາມທຸກຍາກ ບໍ່ມີສູດຕາຍຕົວ ແລະ ບໍ່ສາມາດນຳ ເອົາບົດຮຽນຈາກບ່ອນອື່ນເພື່ອມາເປັນຕົວແບບໄດ້; ແຕ່ຄວນສຸມໃສ່ 5 ດ້ານໃຫຍ່ເຊັ່ນ: (1). ດ້ານສຶກສາ, (2). ດ້ານສາທາລະນະສຸກ, (3). ດ້ານກະສິກຳ (4). ດ້ານໂຍທາທິການ ແລະ (5). ດ້ານກິດຈະກຳສ້າງລາຍຮັບ, ເພື່ອເຮັດໃຫ້ປະຊາຊົນຢູ່ໃນເຂດຮ່າງໄກສອກຫລີກ ໄດ້ເຂົ້າເຖິງການບໍລິການດ້ານຕ່າງໆ ແລະ ຫລຸດຜ່ອນຄວາມທຸກຍາກໄປເທື່ອລະກ້າວ;
- ການຈັດຕັ້ງປະຕິບັດວຽກງານການກໍ່ສ້າງພື້ນຖານໂຄງລ່າງ ແລະ ວຽກງານສົ່ງເສີມການສ້າງ ໃຫ້ຊຸມຊົນມີລາຍຮັບ ແມ່ນເປັນວຽກທີ່ທ້າທາຍ ແລະ ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ, ເນື່ອງຈາກຂອບ ເຂດການຈັດຕັ້ງປະຕິບັດຂອງ ທລຍ ແມ່ນກ້ວາງຂວາງແຕ່ບຸກຄະລາມີຈຳກັດ, ສະນັ້ນ, ຖ້າຫາກກອງ ທຶນໄດ້ດຳເນີນການໃນໄລຍະທີ 2 ຄວນມີການແຍກຄວາມຮັບ ຜິດຊອບອອກເປັນ 3 ພາກໃຫຍ່ຄື: (1)ພາກສ່ວນ ຮັບຜິດຊອບວຽກງານ ພື້ນຖານໂຄງລ່າງ ແລະ (2) ພາກສ່ວນ ຮັບຜິດຊອບວຽກງານ ການສົ່ງເສີມໃຫ້ຊຸມຊົນມີລາຍຮັບ ແລະ (3) ພາກສ່ວນຮັບຜິດຊອບການກະຈາຍຂໍ້ມູນຂ່າວສານ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ.

໓. <u>ທີມງານບໍລິຫານ ທລຍ ຂັ້ນສູນກາງ</u>